# ເຊໂປນມາຍທູເດ

ໜັງສືຂ່າວ ຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ

#ມັງກອນ 2025



CHIFENG GOLD | SEPON

# ໃນສະບັບນີ້


04 ເປີດໂຄງການຂະຫຍາຍຂຸດຄົ້ນ ຄຳພາກຕາເວັນຕົກ ທີ່ ບໍ່ຄຳ-ທອງ ເຊໂປນ



06 ມອບ-ຮັບ ຄະນະກຳມະບານ ຮາກຖານສຸດໃໝ່ຂອງ ບໍ່ຄຳ-ທອງ ເຊໂປນ



08 ກອງປະຊຸມປະຈຳປີຄັ້ງທີ 30 ລະຫວ່າງຄະນະ ຄຸ້ມຄອງໂຄງການ ບໍ່ຄຳ-ທອງ ເຊໂປນ ແລະ LXML



10 ຮອງປະທານປະເທດ ແຫ່ງ ສປປ ລາວ ລົງ ເຄື່ອນໄຫວຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນ



12 ພິທີເປີດໂຮງງານທົດລອງ ການສະກັດສິນແຮ່ ດ້ວຍ ນ້ຳມັນຢາງ (Resin) ທີ່ບໍ່ ຄຳ-ທອງ ເຊໂປນ



15 ກະຊວງສາທາລະນະສຸກ ແລະ LXML ຮ່ວມມື ຈັດຕັ້ງປະຕິບັດການວຽກ HIA ຢູ່ເຂດໂຄງການ ຂະຫຍາຍຂຸດຄົ້ນ ຄຳພາກຕາເວັນຕົກ





20 ພິທີ ມອບ-ຮັບໂຄງການ ລະບົບນ້ຳສະອາດຊຸມຊົນໃຫ້ ແກ່ປະຊາຊົນບ້ານເມືອງຫຼວງ



22 LXML ມອບເສັ້ນທາງປູຢາງ ໃຫ້ແກ່ຊຸມຊົນ ບ້ານໂນນສົມບູນ ເມືອງ ວິລະບູລີ



28 ຊົມເຊີຍຂະບວນການສ້າງ ກິດຈະກຳ ວັນສິ່ງແວດລ້ອມ ໂລກ ຢ່າງຝົດຟື້ນ ທີ່ ບໍ່ຄຳ-ທອງ ເຊໂປນ



29 ພະນັກງານບໍລິສັດ ລ້ານຊ້າງ ມິເນໂຣນ ສ ຈຳກັດ ໄດ້ຮັບທຶນ ການສຶກສາຂອງປະເທດ ອົດສະຕຣາລີ



32 ບໍ່ຄຳ-ທອງ ເຊໂປນ ສືບຕໍ່ ສະໜັບສະໜູນ ທຶນ ການສຶກສາວິຊາຊີບໃຫ້ ແກ່ນັກຮຽນໃນທ້ອງຖິ່ນ ເມືອງ ວິລະບູລີ



34 ສະເຫຼີມສະຫຼອງວັນຊາດ ທີ 2 ທັນວາ ຄົບຮອບ 49 ປີ ທີ່ ບໍ່ຄຳ-ທອງ ເຊໂປນ

# ເປີດໂຄງການຂະຫຍາຍຂຸດຄົ້ນຄຳພາກຕາເວັນຕົກ ທີ່ບໍ່ຄຳ-ທອງ ເຊໂປນ








ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ມີຄວາມພາກພາກພູມໃຈ ທີ່ໄດ້ຈັດພິທີເປີດໂຄງການ ຂະຫຍາຍຂຸດຄົ້ນຄຳພາກຕາເວັນຕົກ ຢ່າງເປັນທາງການ ຂຶ້ນເມື່ອວັນທີ 7 ກັນຍາ 2024 ຜ່ານມານີ້, ການເປີດໂຄງການດັ່ງກ່າວແມ່ນເປັນຂີດໝາຍອັນສຳຄັນ ໃນການພັດທະນາ ການຂຸດຄົ້ນບໍ່ແຮ່ແບບຍືນຍົງ ຢູ່ບໍ່ຄຳ-ທອງ ເຊໂປນ. ເຂົ້າຮ່ວມໃນພິທີຈາກບໍລິສັດ ຊື່ເຟິງ ໂກນລ໌ ທີ່ເປັນບໍລິສັດແມ່ຂອງ LXML, ມີທ່ານ ຫວາງ ຈຽນຮວາ, ປະທານບໍລິສັດ ຊື່ເຟິງ ໂກນລ໌ ພ້ອມດ້ວຍ ບັນດາຜູ້ບໍລິຫານລະດັບສູງລວມມີ: ທ່ານ ນາງ ລິເດຍ ຢາງ, CEO; ທ່ານ ລິວ ຊາວຈາວ, ປະທານຮ່ວມຂອງ ຊື່ເຟິງ ໂກນລ໌; ທ່ານ ຈິງເວີນ ມາວ, ນັກວິຊາການຈາກສະຖາບັນວິສະວະກອນ ສປ ຈີນ; ທ່ານ ມາຣີໂອ ວົງ, ຫົວໜ້າການເງິນ ຊື່ເຟິງ ໂກນລ໌; ແລະ ທ່ານ ຊູບາວ ຕົງ, ເລຂາຄະນະບໍລິຫານງານຂອງ ຊື່ເຟິງ ໂກນລ໌.

ເຂົ້າຮ່ວມຂອງຝ່າຍບໍລິສັດ LXML ນຳໂດຍ ທ່ານ ກາວ ປົວ, ປະທານ LXML ແລະ ທ່ານ ເຈເຣມີ ເດວິດສັນ, ຮັກສາການຜູ້ຈັດການໃຫຍ່ LXML, ທ່ານ ໂຈ ຊິ່ນບົງ, ຜູ້ອຳນວຍການ ແລະ ຮອງ ຜູ້ຈັດການໃຫຍ່, ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML, ມີບັນດາທ່ານຮອງຜູ້ຈັດການໃຫຍ່, ພ້ອມດ້ວຍຜູ້ຈັດການພະແນກ ທີ່ກ່ຽວຂ້ອງ. ທ່ານຜູ້ຕາງໜ້າ, ພະນັກງານ ແລະ ຜູ້ບໍລິຫານ ຈາກບໍລິສັດຜູ້ຮັບເໝົາເຂົ້າຮ່ວມ.

ໃນໂອກາດກ່າວ, ທ່ານປະທານ ຫວາງ ໄດ້ເນັ້ນໜັກເຖິງຜົນສຳເລັດ ແລະ ການຮ່ວມມືທີ່ດີ ທີ່ເຮັດໃຫ້ໂຄງການຂະຫຍາຍ ການຂຸດຄົ້ນຄຳພາກຕາເວັນຕົກ ປະກົດຜົນເປັນຈິງ ຊຶ່ງມັນໄດ້ສະທ້ອນເຖິງ ໝາກຜົນອັນຍິ່ງໃຫຍ່ ໃນໄລຍະຜ່ານມາທີ່ທ່ານໄດ້ມີໂອກາດ ລາຍງານສົນທະນາກັບທ່ານ ນາຍົກລັດຖະມົນຕີຂອງລາວ ກ່ຽວກັບເປົ້າໝາຍ ແລະ ທິດທາງໃນການພັດທະນາ ຂອງໂຄງການບໍ່ຄຳ-ທອງ ເຊໂປນ ແລະ ຄວາມມຸ່ງໝັ້ນຕັ້ງໃຈຂອງບໍລິສັດ ຊື່ເຟິງ ໂກນລ໌ ໃນການເຂົ້າມາລົງທຶນຢູ່ ສປປ ລາວ. ທ່ານໄດ້ຊີ້ໃຫ້ເຫັນເຖິງສິ່ງທ້າທາຍ ທີ່ບໍລິສັດ LXML ໄດ້ປະເຊີນໃນໄລຍະເຂົ້າມາຮັບຊ່ວງຕໍ່ ໃນການດຳເນີນທຸລະກິດ ຂອງໂຄງການ ບໍ່ຄຳ-ທອງ ເຊໂປນນັບຕັ້ງແຕ່ກາງປີ 2013 ເປັນຕົ້ນມາ ໂດຍພາຍໃຕ້ການບໍລິຫານຢ່າງຕັ້ງໜ້າຂອງບໍລິສັດ ຊື່ເຟິງ ໂກນລ໌, ການດຳເນີນການຜະລິດຄຳຈຶ່ງໄດ້ຮັບການຟື້ນຄືນໃໝ່ ຈົນໃນທີ່ສຸດ ກໍ່ໄດ້ເຮັດໃຫ້ການດຳເນີນງານຂອງ ບໍ່ຄຳ-ທອງ ເຊໂປນ ໄດ້ກັບມາມີບົດບາດຂຶ້ນອີກ ເທື່ອໃໝ່ມາຮອດປະຈຸບັນ.

ປະທານ ຫວາງ ຍັງໄດ້ເນັ້ນໜັກເຖິງທ່າແຮງຂອງ ໂຄງການໃໝ່ແຫ່ງນີ້ ທີ່ຈະສົ່ງຜົນປະໂຫຍດອັນໃຫຍ່ຫຼວງ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ລວມທັງຊຸມຊົນທ້ອງຖິ່ນ, ພະນັກງານ, ຜູ້ຮັບເໝົາ, ຜູ້ໃຫ້ບໍລິການ, ທຸລະກິດ ແລະ ພາກລັດຖະບານຂອງລາວ. ທ່ານໄດ້ກ່າວວ່າ "ຄວາມພ້ອມທາງດ້ານແຮງງານ, ອຸປະກອນກົນຈັກ ທີ່ທັນສະໄໝ ແລະ ຍຸດທະວິທີອັນແຮງກ້າ ແມ່ນຫຼັກຖານ ສະແດງເຖິງຄວາມມຸ່ງໝັ້ນຕໍ່ການປະຕິບັດ ການຂຸດຄົ້ນບໍ່ແຮ່ທີ່ມີຄວາມຮັບຜິດຊອບ ຂອງພວກເຮົາ" ໂຄງການຂະຫຍາຍການຂຸດຄົ້ນຄຳພາກຕາເວັນຕົກແຫ່ງນີ້ ມີຄວາມພ້ອມ ທີ່ຈະໃຫ້ຜົນປະໂຫຍດອັນໃຫຍ່ຫຼວງ ໃຫ້ແກ່ຊຸມຊົນທ້ອງຖິ່ນ, ຊຶ່ງຈະຫຼຸດຜ່ອນອັດຕາການຫວ່າງງານ ແລະ ເສີມຂະຫຍາຍການເຕີບໂຕ ທາງດ້ານເສດຖະກິດ ໂດຍຜ່ານ ການສ້າງວຽກເຮັດງານທຳ ແລະ ສະໜອງໂອກາດໃຫ້ແກ່ທຸລະກິດທ້ອງຖິ່ນ. LXML ໄດ້ສະແດງຄວາມຮັບຜິດຊອບ ຕໍ່ສັງຄົມດ້ວຍການປະກອບສ່ວນ ຫຼາຍຢ່າງ ໃຫ້ແກ່ຊຸມຊົນອ້ອມຂ້າງຂອງໂຄງການດັ່ງກ່າວນີ້, ເປັນຕົ້ນແມ່ນການສ້າງລະບົບນ້ຳສະອາດ ໃຫ້ແກ່ຊຸມຊົນຢູ່ບ້ານໃໝ່, ມູນຄ່າຫຼາຍ US$7.000 ແລະ ການສ້າງວິດຖ່າຍ ໃຫ້ແກ່ຄອບຄົວຜູ້ດ້ອຍໂອກາດ ໃນມູນຄ່າຫຼາຍກວ່າ US$60.000. ການລົງທຶນ ເຂົ້າໃນການສ້ອມແປງພື້ນຖານໂຄງລ່າງ ເປັນຕົ້ນແມ່ນ ຫ້ອງການບ້ານ ແລະ ຫ້ອງຮຽນ, ລວມມູນຄ່າກວ່າ US$78.000. ນອກຈາກນັ້ນ, LXML ໄດ້ຊົດເຊີຍພື້ນທີ່ ຂອງໂຄງການດັ່ງກ່າວທັງໝົດ 13,088 ເຮັກຕາ, ລວມມູນຄ່າຫຼາຍກວ່າ US$13 ລ້ານ. ພ້ອມທັງ ໄດ້ສະໜັບສະໜູນໂຄງການ ກອງທຶນພັດທະທ້ອງຖິ່ນ (TF) ແລະ ກອງທຶນພັດທະນາໃຫ້ແກ່ກຸ່ມຜູ້ດ້ອຍໂອກາດ (FADG) ເພື່ອຍົກລະດັບ ຊີວິດການເປັນຢູ່ຂອງຄົວເຮືອນຊຸມຊົນ ທີ່ຢູ່ພາຍໃນພື້ນທີ່ອ້ອມຮອບຂອງໂຄງການ.

ທ່ານ ນາງ ລິເດຍ ຢາງ, CEO ຂອງ ຊື່ເຟິງ ໂກນລ໌ ໄດ້ຂຶ້ນກ່າວເປີດພິທີ ໂດຍ ຊີ້ໃຫ້ເຫັນເຖິງຄວາມກະຕືລືລົ້ນ ໃນການລິເລີ່ມ ຂອງໂຄງການໃໝ່ນີ້ ພ້ອມທັງຜົນສຳເລັດ ແລະ ຄຳໝັ້ນສັນຍາ ທີ່ຈະດຳເນີນການຂຸດຄົ້ນບໍ່ແຮ່ຢ່າງມີປະສິດຕິຜົນ ໂດຍໃຫ້ຄວາມ ສຳຄັນກັບຄວາມຍືນຍົງ ແລະ ການພັດ ທະນາຊຸມຊົນທ້ອງຖິ່ນ. ທ່ານ ໄດ້ເນັ້ນໜັກໂດຍໃຫ້ບຸລິມະສິດສູງສຸດກັບການມີສ່ວນຮ່ວມ ຂອງຊຸມຊົນ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມ. "ພວກເຮົາມີຄວາມພາກພູມໃຈ ຕໍ່ອະນາຄົດຂອງໂຄງການດັ່ງກ່າວນີ້ ແລະ ພ້ອມທີ່ຈະມອບໂອກາດດີໆ ໃນການສ້າງວຽກເຮັດງານທຳ ໃຫ້ແກ່ຊຸມຊົນທ້ອງຖິ່ນ ແລະ ຜູ້ມີສ່ວນຮ່ວມ ເພື່ອສິ່ງເສີມອະນາຄົດອັນຈະເລີນຮຸ່ງເຮືອງ ແລະ ຍືນຍົງສຳລັບທຸກຄົນທີ່ກ່ຽວຂ້ອງ"

ບໍລິສັດ LXML ຂໍສະແດງຄວາມຮູ້ບູນຄຸນ ແລະ ຕີລາຄາສູງຕໍ່ການສະໜັບສະໜູນ ຈາກເຈົ້າເມືອງ ວິລະບູລີ ແລະ ອຳນາດການປົກຄອງບ້ານ ທີ່ໄດ້ອຳນວຍຄວາມສະດວກໃຫ້ແກ່ຂະບວນການຊົດເຊີຍທີ່ດິນ ທີ່ມີມາແຕ່ດົນນານ ແລະ ມີຄວາມສັບສົນ. ຄວາມພະຍາຍາມຮ່ວມກັນນີ້ໄດ້ເນັ້ນໜັກເຖິງຄຳໝັ້ນສັນຍາ ທີ່ຈະສ້າງສາຍພົວພັນທີ່ໂປ່ງໃສ ແລະ ມີຜົນປະໂຫຍດ ຮ່ວມກັບປະຊາຊົນທ້ອງຖິ່ນ.

ເພື່ອຂະຫຍາຍໂຄງການ ຂຸດຄົ້ນຄຳພາກຕາເວັນຕົກ ກ້າວເຂົ້າສູ່ໄລຍະໃໝ່ຕໍ່ໄປ, LXML ຫວັງວ່າຈະເສີມຂະຫຍາຍບົດບາດຂອງຕົນ ໃຫ້ເປັນຜູ້ນຳໃນການຂຸດຄົ້ນບໍ່ແຮ່ ແບບຍືນຍົງ, ພ້ອມກັນນັ້ນກໍ່ຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນທ້ອງຖິ່ນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ຂອງແຂວງສະຫວັນນະເຂດຢ່າງຕໍ່ເນື່ອງ.




# ມອບ-ຮັບ ຄະນະກຳມະບານຮາກຖານຊຸດໃໝ່ ຂອງ ບໍ່ຄຳ-ທອງ ເຊໂປນ

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ທີ່ໂຄງການບໍ່ຄຳທອງ-ເຊໂປນ ໄດ້ມີພິທີມອບ-ຮັບໜ້າທີ່ ລະຫວ່າງ ຄະນະກຳມະບານຮາກຖານຊຸດເກົ່າ ແລະ ຊຸດໃໝ່ ໃນວັນທີ 8 ພະຈິກ 2024, ທີ່ເມືອງວິລະບູລີ. ໃຫ້ກຽດເຂົ້າຮ່ວມພິທີໂດຍ ທ່ານ ນາງ ສີສະຫວັດ ໂຄດທະວົງສາ ປະທານ ຄະນະບໍລິຫານງານສະຫະພັນກຳມະບານ ແຂວງສະຫວັນນະເຂດ, ທ່ານ ສະໝານ ອະເນກາ ຜູ້ອຳນວຍການໃຫຍ່ LXML, ທ່ານ ໂຈ ຊິນປິງ, ຮອງຜູ້ຈັດການໃຫຍ່ LXML, ມີພະນັກງານວິຊາການ ຈາກພາກສ່ວນລັດ ແລະ ບໍລິສັດ LXML ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ການມອບຮັບໜ້າທີ່ ໃນຄັ້ງນີ້ ເປັນການຮັບຮູ້ຜົນງານ ແລະ ສັນລະເສີນ ໜ້າທີ່ຮັບຜິດຊອບຂອງສະຫະພັນກຳມະບານ ຮາກຖານ ທັງສອງຊຸດ ຊຶ່ງໄດ້ສະແດງໃຫ້ເຫັນເຖິງບັນດາຜົນງານ ທີ່ບັນລຸໄດ້ໃນໄລຍະຜ່ານມາ ແລະ ເປັນຂີດໝາຍ ຂອງຄວາມມຸ່ງໝັ້ນໃນຕໍ່ໜ້າ. ທ່ານ ນາງ ສີສະຫັວດ ໂຄດທະວົງສາ ໄດ້ກ່າວສະແດງຄວາມຂອບໃຈ ແລະ ໃຫ້ການຊຸກຍູ້ຢ່າງຈິງໃຈ ມາຍັງຄະນະທຸກທ່ານ ທີ່ມີຄວາມຕັ້ງໃຈໃນການຮັບໃຊ້ວຽກງານ ດັ່ງກ່າວ. ທ່ານ ຍັງໄດ້ຮຽກຮ້ອງໃຫ້ຄະນະກຳມະບານຊຸດໃໝ່ ຈົ່ງເຮັດວຽກຢ່າງຂະຫຍັນຂັນແຂງ ເພື່ອຮັບປະກັນ ໃຫ້ວຽກງານກຳມະບານ ປະສົບຜົນສຳເລັດໄດ້ຕາມຄາດໝາຍຢ່າງຕັ້ງໜ້າ. ໃນພິທີດັ່ງກ່າວ ຍັງໄດ້ມີການມອບໃບຍ້ອງຍໍໃຫ້ແກ່ ທ່ານ ດຣ ອຳຄຳ ຈັນທາທິລາດ ອະດີດປະທານສະຫະພັນກຳມະບານ, ໂດຍໄດ້ຮັບຮູ້ຜົນງານດີເດັ່ນ ຂອງທ່ານ ໃນຕະຫຼອດໄລຍະ 14 ປີທີ່ຜ່ານມາ ທີ່ໄດ້ອຸທິດຕົນຕໍ່ອົງການ ສະຫະພັນກຳມະບານຂອງບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໂດຍສະເພາະການນຳພາ ແລະ ການປະກອບສ່ວນອັນໜັກແໜ້ນຂອງຜູ້ກ່ຽວ.

ທ່ານ ໂຈ ຊິນປິງ ໄດ້ເນັ້ນໜັກເຖິງບົດບາດສຳຄັນ ທີ່ສະຫະພັນກຳມະບານ ຄວນເອົາໃຈໃສ່ຢູ່ພາຍໃນອົງກອນ, ໂດຍທ່ານໄດ້ຊີ້ໃຫ້ເຫັນວ່າ, ຄະນະກຳມະບານບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ສ້າງຕັ້ງຂຶ້ນໃນປີ 2010, ໂດຍໄດ້ຮັບໃຊ້ພະນັກງານຢ່າງສັດຊື່ ໂປ່ງໃສມາເປັນເວລາ 14 ປີ. ທ່ານໄດ້ຮັບຮູ້ການປະກອບສ່ວນ ຂອງຄະນະກຳມະບານຊຸດເກົ່າໃນອະດີດ, ທີ່ໄດ້ພະຍາຍາມອຸທິດຕົນ ເພື່ອເປັນຕົວແທນ ໃຫ້ແກ່ພະນັກງານຢ່າງມີປະສິດທິຜົນ ແລະ ຊ່ວຍແກ້ໄຂໄກ່ເກ່ຍບັນຫາສຳຄັນຕ່າງໆ ທີ່ຜ່ານມາ.

ຜູ້ອຳນວຍການໃຫຍ່ LXML ທ່ານສະໝານ ອະເນກາ ໄດ້ຢ້ຳຄືນເຖິງຄວາມສຳຄັນ ຂອງພາລະກິດຂອງຄະນະກຳມາບານຊຸດໃໝ່, ຊຶ່ງຈະປະກອບມີສິ່ງທ້າທາຍ ແລະ ໂອກາດໃນຕໍ່ໜ້າ. ທ່ານໄດ້ຊຸກຍູ້ໃຫ້ຄະນະກຳມະບານ ສຸມໃສ່ສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກພະນັກງານ ເພື່ອເສີມສ້າງການເຕີບໂຕຢ່າງມີປະສິດທິພາບ ແລະ ສ້າງຜົນປະໂຫຍດໂດຍກົງ ໃຫ້ແກ່ພະນັກງານ ແລະ ບໍລິສັດ.

ທ່ານ ນາງ ສີສະຫວັດ ໂຄດທະວົງສາ ໄດ້ສະຫຼຸບພິທີ ໂດຍການປະກາດແຕ່ງຕັ້ງ ຄະນະບໍລິຫານງານ ສະຫະພັນກຳມະບານຮາກຖານ ຊຸດໃໝ່ ໂດຍມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ນາງ ສຸວັນທາ ລິນຊິມພູ ເປັນປະທານ
2. ທ່ານ ໂອສາ ສີທອງຈັນ ເປັນຮອງປະທານ, ທັງເປັນປະທານກວດກາ
3. ທ່ານ ວັນທອງ ແສນບຸດຕະລາດ ເປັນຮອງປະທານ
4. ທ່ານ ນະລົງສັກ ມະຫາລາດ ເປັນກຳມະການ
5. ທ່ານ ໄຊສະຫວັນ ພົມມະກົດ ເປັນກຳມະການ




ຄະນະ ກຳມະບານຮາກຖານຊຸດໃໝ່ ໄດ້ຂຶ້ນກ່າວປະຕິຍານຕົນ ໂດຍໃຫ້ຄຳໝັ້ນສັນຍາວ່າ ຈະມີການ ເລີ່ມດຳເນີນການເຄື່ອນໄຫວຂອງຕົນຢ່າງຕັ້ງໜ້າ ຕໍ່ໄປ, ພ້ອມທັງຈະຊຸກຍູ້ຊ່ວຍເຫຼືອ ແລະ ໃຫ້ຄວາມຮ່ວມມື ກັບພາກສ່ວນທີ່ກ່ຽວຂ້ອງ, ຮັບປະກັນຜົນປະໂຫຍດ ຂອງສະມາຊິກສະຫະພັນກຳມະບານຢ່າງ ມີປະສິດ ທິຜົນ.



# ກອງປະຊຸມປະຈຳປີຄັ້ງທີ 30 ລະຫວ່າງຄະນະຄຸ້ມຄອງໂຄງການ ບໍ່ຄຳ-ທອງ ເຊໂປນ ແລະ LXML









ໃນວັນທີ 31 ກໍລະກົດ 2024 ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ຈັດກອງປະຊຸມປະຈຳປີຄັ້ງທີ 30 ຮ່ວມກັບພາກສ່ວນລັດຖະບານ ກໍ່ຄືຄະນະຄຸ້ມຄອງໂຄງການ ບໍ່ຄຳ-ທອງ ເຊໂປນ. ກອງປະຊຸມໃນຄັ້ງນີ້ ໃຫ້ກຽດເປັນປະທານ ໂດຍທ່ານ ທອງພັດ ອິນທະວົງ, ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່, ປະທານຄະນະຄຸ້ມຄອງໂຄງການ ບໍ່ຄຳ-ທອງ ເຊໂປນ ຈາກລັດຖະບານ ຮ່ວມກັບທ່ານ ກາວ ປົ່ວ, ປະທານ LXML, ຕາງໜ້າເຂົ້າຮ່ວມ ຈາກພາກສ່ວນລັດຖະບານ ລວມມີ ຫ້ອງວ່າການສຳນັກ ນາຍົກລັດຖະມົນຕີ, ບັນດາຫົວໜ້າກົມ, ຮອງກົມ, ຫົວໜ້າພະແນກ, ຫົວໜ້າຫ້ອງການ, ພະນັກງານວິຊາການ ຈາກຂະແໜງການການຕ່າງໆ ທີ່ກ່ຽວຂ້ອງ, ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ, ຈາກພາກສ່ວນບໍລິສັດມີ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML, ທ່ານໃຈ ຊີນປົງ, ຮອງປະທານ LXML, ທ່ານ ເຈເຣມີ ເດວິດຊັນ, ວ່າການຜູ້ຈັດການໃຫຍ່ LXML ແລະ ພະນັກງານວິຊາການ ຈາກບໍລິສັດເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອລາຍງານ ຄວາມຄືບໜ້າຂອງ ການດຳເນີນງານກ່ຽວກັບວຽກງານ ບໍ່ແຮ່ຂອງບໍລິສັດ ແລະ ແຜນການພັດທະນາໂຄງການ ບໍ່ຄຳ-ທອງ ໃນຊຸມປີຕໍ່ໜ້າ. ນອກນີ້ກໍເປັນການລາຍງານ ວຽກງານອັນພົ້ນເດັ່ນອື່ນໆ ເພື່ອສົ່ງເສີມການພົວພັນຮ່ວມມືທີ່ດີທີ່ສຸດ ລະຫວ່າງລັດຖະບານ ແລະ LXML, ຮັບປະກັນຄວາມເຂົ້າໃຈ ເຊິ່ງກັນແລະ ກັນ ແລະ ເພີ່ມປະສິດທິພາບໃນການຮ່ວມມືທັງສອງຝ່າຍ.

ໃນໂອກາດ ກ່າວເປີດກອງປະຊຸມ, ທ່ານ ທອງພັດ ອິນທະວົງ, ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ກ່າວຊົມເຊີຍການປະກອບສ່ວນ ອັນສຳຄັນຂອງ LXML ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ທ່ານຮອງລັດຖະມົນຕີໄດ້ເນັ້ນໜັກເຖິງບົດບາດ ຂອງບໍລິສັດໃນການພັດທະນາປະຊາຊົນ ແລະ ຊຸມຊົນທ້ອງຖິ່ນ ອ້ອມຂ້າງຂອງໂຄງການບໍ່ຄຳ-ທອງເຊໂປນ.

ທ່ານຮອງລັດຖະມົນຕີ ຮຽກຮ້ອງໃຫ້ບັນດາບໍລິສັດ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ເຮັດວຽກຕາມສັນຍາ MEPA ຢ່າງຕັ້ງໜ້າ ແລະ ມີປະສິດທິຜົນ. ນອກຈາກນັ້ນ, ທ່ານຍັງໄດ້ຊຸກຍູ້ໃຫ້ LXML ຮັກສາມູນເຊື້ອອັນດີງາມຂອງຕົນ ໃນການເປັນບໍລິສັດບໍ່ແຮ່ຊັ້ນນຳ ທີ່ເປັນຕົວແບບທີ່ຄອງຄວາມເປັນເລີດ ໃນການດຳເນີນງານຂຸດຄົ້ນບໍ່ແຮ່ໃນ ສປປ ລາວ, ຮັບປະກັນ ຊີວິດການເປັນຢູ່ຂອງຊຸມຊົນ ແລະ ຄວາມປອດໄພທີ່ດີ. ນອກນີ້, ທ່ານຍັງ ໄດ້ກ່າວຍ້ອງຍໍວ່າ LXML ເປັນບໍລິສັດຂຸດຄົ້ນບໍ່ແຮ່ທີ່ມີປະສິດທິຜົນດີທີ່ສຸດໃນລາວ.

ໃນຖານະເປັນປະທານຮ່ວມ, ທ່ານກາວ ປົ່ວ, ປະທານ LXML, ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ລັດຖະບານ ທີ່ໄດ້ຮັບຮູ້ເຖິງຜົນງານຂອງບໍລິສັດ ໃນການປະກອບສ່ວນອັນລ້ຳຄ່າຂອງບໍລິສັດເຂົ້າໃນການພັດທະນາເສດຖະກິດ ແລະ ສັງຄົມຂອງ ສປປ ລາວ. ທ່ານໄດ້ກ່າວຢ້ຳຄືນ ເຖິງຄວາມມຸ່ງໝັ້ນຂອງ LXML ທີ່ຈະຍົກສູງຄຸນນະພາບຂອງການພັດທະນາຢູ່ ບໍ່ຄຳ-ທອງເຊໂປນ ໂດຍຜ່ານການປັບປຸງປະສິດທິພາບ ທີ່ສ້າງຜົນກຳໄລໃຫ້ແກ່ລັດຖະບານ, LXML ແລະ ພາກສ່ວນກ່ຽວຂ້ອງ. ປະທານ LXML ໄດ້ຮັບຮູ້ເຖິງຄວາມສຳຄັນຂອງການຮ່ວມມືຢ່າງໃກ້ຊິດ ກັບລັດຖະບານ, ເຊິ່ງມີຄວາມສຳຄັນຕໍ່ການພັດທະນາແບບຍືນຍົງ ຂອງ LXML ແລະ ໂຄງການບໍ່ຄຳ-ທອງເຊໂປນເປັນຢ່າງຍິ່ງ, ພ້ອມດຽວກັນນັ້ນຍັງໄດ້ສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນທ້ອງຖິ່ນນຳດ້ວຍ.

ທ່ານກ່າວຕື່ມອີກວ່າ: "ໃນປີ 2023, LXML ໄດ້ປະຕິບັດພັນທະເງິນອຸດໜູນ ໃຫ້ແກ່ພະນັກງານຄົນລາວທັງໝົດ ໂດຍທຽບໃສ່ອັດຕາເງິນເຟີ້, ເຊິ່ງເຮັດໃຫ້ເງິນເດືອນສະເລ່ຍ ຂອງພະນັກງານເພີ່ມຂຶ້ນ 40% ເພື່ອຊ່ວຍຫຼຸດຜ່ອນຜົນກະທົບຈາກ ອັດຕາແລກປ່ຽນ. ບໍລິສັດ ໄດ້ຈ່າຍຄ່າພາສີລາຍໄດ້ US$28 ລ້ານ, ຄ່າຊັບພະຍາກອນແຮ່ທາດ US$22 ລ້ານ ແລະ ຈັດສັນ US$1 ລ້ານ ໃຫ້ແກ່ກອງທຶນພັດທະນາທ້ອງຖິ່ນ (TF), ນອກນັ້ນຍັງໄດ້ລົງທຶນ US$230,000 ເຂົ້າໃນ ໂຄງລ່າງພື້ນຖານຂອງຊຸມຊົນ. ເພື່ອຕໍ່ອາຍຸການຂຸດຄົ້ນບໍ່ແຮ່ໃຫ້ຍາວນານ ໃນຂະນະທີ່ໃຫ້ຜົນປະໂຫຍດ ແກ່ຊຸມຊົນທ້ອງຖິ່ນ, ບໍລິສັດ LXML ໄດ້ລົງທຶນ US$11 ລ້ານ ເຂົ້າໃນການປະດິດສ້າງທາງດ້ານເຕັກໂນໂລຊີ ແລະ ຄວາມມຸ່ງໝັ້ນ ໃນການຂຸດຄົ້ນບໍ່ແຮ່ ເຮັດໃຫ້ສາມາດ ຜະລິດປະລິມານຊັບພະຍາກອນຄຳ ເພີ່ມຂຶ້ນຢ່າງຫຼວງຫຼາຍ, ເຊິ່ງເຮັດໃຫ້ອາຍຸການຂຸດຄົ້ນບໍ່ແຮ່ ໄດ້ຂະຫຍາຍອອກໄປຕື່ມອີກຫຼາຍປີ."

ກອງປະຊຸມ ໄດ້ມີການລາຍງານສັງລວມກ່ຽວກັບ ການເຄື່ອນໄຫວວຽກງານຂອງບໍລິສັດໃນປີ 2023, ກ່າວສະເໜີໂດຍທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML. ຊຶ່ງທ່ານໄດ້ຍົກໃຫ້ເຫັນເຖິງການປະກອບສ່ວນ ອັນສຳຄັນຂອງ LXML ຕໍ່ກັບການພັດທະນາຊຸມຊົນທ້ອງຖິ່ນ ລວມມີດ້ານການຄ້ຳປະກັນສະບຽງອາຫານ ໂດຍຜ່ານຂະແໜງກະສິກຳ, ການຊ່ວຍເຫຼືອວຽກງານ ການສຶກສາສຳລັບເຍົາວະຊົນ, ການເບິ່ງແຍງສຸຂະພາບຊຸມຊົນ ແລະ ພື້ນຖານໂຄງລ່າງ ພາຍໃນຊຸມຊົນອ້ອມຂ້າງໂຄງການບໍ່ຄຳ-ທອງ ເຊໂປນ.

ນອກຈາກນັ້ນ, ທ່ານ ເຈເຣມີ ເດວິດສັນ, ວ່າການຜູ້ຈັດການໃຫຍ່ຂອງ LXML, ໄດ້ສະເໜີພາບລວມຂອງການຜະລິດ ແລະ ການດຳເນີນງານໃນຊຸມປີທີ່ຜ່ານມາ, ພ້ອມທັງແຜນການ ແລະ ຄາດໝາຍໃນຊຸມປີຕໍ່ໜ້າ, ໂອກາດທີ່ຈະຊອກຄົ້ນບາງພື້ນທີ່ ທີ່ມີທ່າແຮງດ້ານຊັບພະຍາກອນແຮ່ຄຳ ເພື່ອການຂະຫຍາຍຕົວຂອງ ບໍ່ຄຳ-ທອງເຊໂປນ ໃຫ້ຄົງຢູ່ອີກຍາວນານ.

LXML ຍັງຄົງມຸ່ງໝັ້ນໃນການສົ່ງເສີມການພັດທະນາ ບຸກຄາລະກອນຂອງທ້ອງຖິ່ນ ໃຫ້ມີຄວາມຮູ້ຄວາມສາມາດ, ມອບບຸລິມະສິດແກ່ຄົນລາວ ໃນການເຮັດວຽກເປັນຫົວໜ້າສາຍງານ ແລະ ຍັງໃຫ້ໂອກາດ ການຝຶກອົບຮົມຢ່າງກວ້າງຂວາງ ໃນທົ່ວທຸກສາຂາວິຊາຕ່າງໆ ແກ່ຄົນລາວທ້ອງຖິ່ນອີກດ້ວຍ. ປະຈຸບັນ, LXML ມີພະນັກງານປະມານ 3,860 ຄົນ, ໃນນັ້ນ 95% ເປັນສັນຊາດລາວ, ຫຼາຍກວ່າ 25% ເປັນເພດຍິງ ແລະ 63% ແມ່ນຄົນທ້ອງຖິ່ນທີ່ອາໄສຢູ່ໃນເຂດໃກ້ຄຽງ ຂອງໂຄງການເຊໂປນ. ຍິ່ງກວ່ານັ້ນ, 97% ຂອງຕຳແໜ່ງ ຫົວໜ້າສາຍງານ ແລະ 60% ຂອງພະນັກງານທີ່ເຮັດວຽກໃນຕຳແໜ່ງຫົວໜ້າພະແນກ ແມ່ນພະນັກງານຄົນລາວ. LXML ໄດ້ອຸທິດຕົນ ເພື່ອສືບຕໍ່ພາລະກິດຂອງການພັດທະນາ ຄວາມສາມາດດ້ານການຂຸດຄົ້ນບໍ່ແຮ່ ທີ່ມີສີມືລະດັບສູງສຸດໃນລາວ.

ກອງປະຊຸມ ໄດ້ມີການແລກປ່ຽນຄວາມຄິດເຫັນເຊິ່ງກັນ ແລະ ກັນຢ່າງມີປະສິດທິຜົນ ແລະ ມີການຖາມ-ຕອບຕໍ່ບາງບັນຫາ ທີ່ສຳຄັນ, ມີການປຶກສາຫາລື ຢ່າງເປີດກວ້າງຕໍ່ບັນຫາຕ່າງໆ, ພ້ອມທັງຊອກຫາວິທີແກ້ໄຂຮ່ວມກັນຢ່າງສັນຕິ.






# ຮອງປະທານປະເທດລົງເຄື່ອນໄຫວຢ້ຽມຢາມ ບໍ່ຄໍາ-ທອງ ເຊໂປນ

ໃນວັນທີ 16 ມິຖຸນາ 2024 ຄະນະຜູ້ແທນ ຂັ້ນສູງຈາກສູນກາງພັກ, ພະນະທ່ານ ນາງ ປານີ ຢາທໍ່ຕູ້, ກໍາມະການ ກົມການເມືອງສູນກາງພັກ, ຮອງປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ລົງເຄື່ອນໄຫວຢ້ຽມຢາມ ໂຄງການ ບໍ່ຄໍາ-ທອງ ເຊໂປນ, ບໍລິສັດ ລ້ານຊ້າງ ມິເນໂຣນ ສ໌ ຈໍາກັດ (LXML) ດ້ວຍຄວາມປະທັບໃຈ ແລະ ປະສົບຜົນສໍາເລັດຢ່າງຈົບງາມ.

ຄະນະຜູ້ຕິດຕາມ ການນໍາຂັ້ນສູງໃນຢ້ຽມຢາມຄັ້ງນີ້ ລວມມີ ທ່ານ ບຸນໂຈມ ອຸບົນປະເສີດ, ເຈົ້າແຂວງສະຫວັນນະເຂດ, ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ, ມີບັນດາເຈົ້າໜ້າທີ່ຂັ້ນສູງຈາກສູນກາງ, ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ. ການຢ້ຽມຢາມໃນຄັ້ງນີ້ ສະແດງໃຫ້ເຫັນເຖິງການພົວພັນຮ່ວມມື ລະຫວ່າງ LXML ແລະ ລັດຖະບານຂັ້ນສູນກາງ ໃນການຊຸກຍູ້ວຽກງານຂອງບໍລິສັດ ໃຫ້ມີໝາກຜົນທີ່ດີ ເປັນຕົ້ນແມ່ນ ການປະກອບສ່ວນ ທາງດ້ານເສດຖະກິດ-ສັງຄົມ ຢ່າງຫຼວງຫຼາຍ ຈາກ LXML ໃນຖານະ ທີ່ເປັນນັກລົງທຶນຊັ້ນນໍາ ຜູ້ທີ່ມີຄວາມຊ່ຽວຊານ ດ້ານການຜະລິດແຮ່ທາດ ທີ່ໄດ້ມາດຕະຖານສາກົນຢູ່ ສປປ ລາວ.

ໂດຍການມອບໝາຍ ຂອງປະທານບໍລິສັດ LXML, ທ່ານ ກາວ ປົ່ວ ແລະ ເພື່ອຮັບປະກັນການສະໜອງຂໍ້ມູນຂ່າວສານ ທີ່ມີຄວາມເຂົ້າໃຈ ຈະແຈ້ງກ່ຽວກັບໂຄງການ ເຊໂປນ ໃຫ້ແກ່ ພາລະກິດການເຂົ້າມາຢ້ຽມຢາມ ຂອງການນໍາລະດັບສູງຂອງລັດຖະບານໃນຄັ້ງນີ້, ເປັນກຽດໃຫ້ການຕ້ອນຮັບ ໂດຍ ທ່ານ ໃຈ ຊິນປິງ, ຮອງປະທານບໍລິສັດ ແລະ ທັງເປັນຮອງຜູ້ຈັດການທົ່ວໄປ, ຝ່າຍສະໜັບສະໜູນທຸລະກິດ ໂດຍທ່ານໄດ້ກ່າວສະແດງການຕ້ອນຮັບຕໍ່ ພະນະທ່ານ ນາງ ປານີ ຢາທໍ່ຕູ້ ພ້ອມດ້ວຍ ຄະນະ ຢ່າງຈິງໃຈ ໃນນາມຕາງໜ້າຈາກປະທານບໍລິສັດ, ຈາກນັ້ນ ທ່ານໄດ້ນໍາສະເໜີພາບລວມ ຂອງການດໍາເນີນງານຂອງບໍລິສັດ ໃນປັດຈຸບັນຂອງໂຄງການ ບໍ່ຄໍາທອງ-ເຊໂປນ ແລະ ແຜນການພັດທະນາໃນອະນາຄົດຂອງ ບໍລິສັດ LXML ພາຍໃຕ້ສັນຍາ MEPA ຕໍ່ກັບລັດຖະບານລາວ.

ພະນະທ່ານ ນາງ ປານີ ຢາທໍ່ຕູ້, ຮອງປະທານປະເທດລາວ ໄດ້ຍ້ອງຍໍການປະກອບສ່ວນ ອັນດີງາມຂອງ LXML ຕໍ່ກັບປະເທດລາວ, ໂດຍພະນະທ່ານ ໄດ້ຮັບຮູ້ເຖິງບົດບາດອັນສໍາຄັນ ຂອງບໍລິສັດ ໃນການປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ໃນລະດັບຊາດ, ແຂວງ ແລະ ຊຸມຊົນທ້ອງຖິ່ນທີ່ຢູ່ອ້ອມຂ້າງ ໂຄງການບໍ່ຄໍາ-ທອງ ເຊໂປນ. ທ່ານ ໄດ້ກ່າວຍົກຍ້ອງ ຕໍ່ການຮ່ວມມືອັນດີງາມລະຫວ່າງ LXML ກັບລັດຖະບານ.

ພະນະທ່ານ ຮອງປະທ່ານ ປະເທດ ໄດ້ສະເໜີໃຫ້ ມີການແຈກຢາຍກອງທຶນ ພັດທະນາທ້ອງຖິ່ນ (TF) ຢ່າງກວ້າງຂວາງ ເພື່ອໃຫ້ໄປຊ່ວຍເຫຼືອຊຸມຊົນທ້ອງຖິ່ນ ເຂດອື່ນໆ ນໍາອີກ. ທ່ານຮູ້ສຶກດີໃຈຫຼາຍທີ່ໄດ້ຍິນວ່າ ກອງທຶນພັດທະນາທ້ອງຖິ່ນ (TF) ໄດ້ໃຫ້ທຶນການສຶກສາແກ່ນັກຮຽນເກັ່ງ ຂອງໂຮງຮຽນ ມັດທະຍົມຕອນປາຍເມືອງ. ນອກນີ້, ທ່ານ ຍັງໄດ້ສະເໜີໃຫ້ບໍລິສັດຊ່ວຍພິຈາລະນາ ການສະໜັບສະໜູນນັກຮຽນຊັ້ນ ປ5 ແລະ ຄູສອນຂອງໂຮງຮຽນປະຖົມອີກດ້ວຍ.

ກ່ຽວກັບກອງທຶນ ຊ່ວຍເຫຼືອຄອບຄົວຜູ້ດ້ອຍໂອກາດ (FADG), ທ່ານຮອງປະທານປະເທດ ຍັງໄດ້ຊຸກຍູ້ໃຫ້ LXML ມີການສົ່ງເສີມຊຸມຊົນໃຫ້ມີສັດຕະວະແພດ ທີ່ເປັນມືອາ ຊີບສູງເພື່ອມາສະໜັບສະໜູນການບໍລິການໃຫ້ແກ່ຊຸມຊົນ, ນອກນີ້ໃຫ້ທາງບໍລິສັດເອົາໃຈໃສ່ ສົ່ງເສີມທາງດ້ານກະສິກໍາ ແລະ ການລ້ຽງສັດ ເປັນທ່າແຮງໃນການຂັບເຄື່ອນເສດຖະກິດຂອງທ້ອງຖິ່ນ, ເນື່ອງ ຈາກປະຈຸບັນ ຕະຫຼາດຈີນແມ່ນມີຄວາມຕ້ອງການ ການນໍາເຂົ້າງົວ ເປັນຈໍານວນຢ່າງຫຼວງຫຼາຍໃນແຕ່ລະປີ.

ທ່ານ ສະໝານ ອະເນກາ, ຜູ້ອໍານວຍການໃຫຍ່ LXML ໄດ້ຕອບຄໍາຊັກຖາມ ຂອງພະນະທ່ານ ຮອງປະທານປະເທດ ແລະ ໄດ້ຊີ້ແຈງກ່ຽວກ່ຽວກັບ ການຮ່ວມມື ຂອງບໍລິສັດ ແລະ ລັດຖະບານຂັ້ນສູນກາງ, ແຂວງ, ເມືອງ ແລະ ບັນດາທ້ອງຖິ່ນ. ຫຼັງຈາກການພົບປະໂອ້ລົມ ແລະ ຊີ້ນໍາຂອງພະນະທ່ານແລ້ວ ກໍ່ໄດ້ມີການພາຄະນະທຸກທ່ານ ເຂົ້າໄປຢ້ຽມຊົມເບິ່ງພາກສະໜາມຂອງບໍລິສັດ ໂດຍຄະນະຜູ້ແທນ ຍັງໄດ້ເຂົ້າໄປຢ້ຽມຢາມໂຮງງານຜະລິດຄໍານໍາອີກດ້ວຍ.

ພະນະທ່ານ ໄດ້ຮູ້ສຶກດີໃຈຫຼາຍທີ່ໄດ້ເຫັນຜູ້ຮັບເໝົາ ໃນທ້ອງຖິ່ນຫຼາຍບໍລິສັດ ໄດ້ຮັບສັນຍາການເຮັດວຽກກັບໂຄງການ ບໍ່ຄໍາ-ທອງ ເຊໂປນ ໃນນັ້ນລວມມີບໍລິສັດ VDC, KXN, Hommalar Development Co., Vethasin Construction Co, Ltd ໃນການເປັນຜູ້ສະໜອງ ແລະ ບໍລິການທ້ອງຖິ່ນ.

ສຸດທ້າຍ, ທ່ານ ພະນະທ່ານ ຮອງປະທານປະເທດ ແລະ ທ່ານເຈົ້າແຂວງສະຫວັນນະເຂດ ມີຄວາມຍິນດີ ແລະ ຊຸກຍູ້ LXML ໃຫ້ຮັກສາ ບໍລິສັດຊັ້ນນໍາຂອງຕົ້ນໃຫ້ທີ່ດີສຸດ ແລະ ສືບຕໍ່ບັນລຸການຂຸດຄົ້ນບໍ່ແຮ່ ຢ່າງມີຄວາມຮັບຜິດຊອບໃນການ ຄຸ້ມຄອງສິ່ງແວດລ້ອມ ແລະ ພັດທະນາຊຸມຊົນໃຫ້ໄດ້ຕາມມາດຕະຖານສາກົນ.









# ພິທີເປີດໂຮງງານທົດລອງການສະກັດສິນແຮ່ດ້ວຍນ້ຳມັນຢາງ (Resin) ຢູ່ ບໍ່ຄຳ-ທອງ ເຊໂປນ

LXML ມີຄວາມພູມໃຈມານຳສະເໜີຜົນສຳເລັດ ຂອງການເປີດໂຮງງານທົດລອງສະກັດສິນແຮ່ດ້ວຍ Resin ຢູ່ທີ່ໂຄງການຂຸດຄົ້ນ ບໍ່ຄຳ-ທອງ ເຊໂປນ, ທີ່ຕັ້ງຢູ່ເມືອງວິລະບູລີ ແຂວງສະຫວັນນະເຂດ. ເຊິ່ງໄດ້ຈັດຂຶ້ນໃນວັນທີ 26 ກໍລະກົດ 2024 ທີ່ຜ່ານມາ.

ເຕັກໂນໂລຊີ ການສະກັດສິນແຮ່ດ້ວຍ Resin ສະແດງໃຫ້ເຫັນເຖິງການກ້າວກະໂດດຂັ້ນ ດ້ານນະວັດຕະກຳ ໃນຂະບວນການສະກັດສິນແຮ່ຄຳ ຊຶ່ງແຕກຕ່າງຈາກວິທີການ ແບບດັ່ງເດີມທີ່ນຳໃຊ້ກາກບອນ, ຂະບວນການນຳໃຊ້ Resin ແມ່ນໃຊ້ຢາງສັງເຄາະເພື່ອເພີ່ມການຈັບຕົວຂອງແຮ່ຄຳ ໃຫ້ໄດ້ຫຼາຍຂຶ້ນ. ການໃຊ້ເຕັກໂນໂລຊີທີ່ທັນສະໄໝນີ້ ຄາດວ່າຈະເພີ່ມອັດຕາການສະກັດຄຳ ຂອງໂຄງການບໍ່ຄຳທອງ-ເຊໂປນ ໄດ້ຢ່າງຫຼວງຫຼາຍ.

ເລີ່ມແຕ່ປີກາຍນີ້, ທີມງານຊ່ຽວຊານ ບໍ່ຄຳ-ທອງ ເຊໂປນ ໄດ້ມີການລິເລີ່ມໂຄງການທົດລອງແບບຄົບວົງຈອນ, ເລີ່ມຈາກການທົດລອງເຄື່ອງຈັກ (ອຸປະກອນ) ກ້າວໄປສູ່ໂຮງງານການທົດລອງແບບຈຳລອງ. ຊຶ່ງສາມາດນຳໄປສູ່ ຜົນທີ່ໄດ້ຮັບທີ່ຂ້ອນຂ້າງດີຢ່າງຕໍ່ເນື່ອງ, ໂດຍສະແດງໃຫ້ເຫັນເຖິງການປັບປຸງ ຂະບວນການສະກັດສິນແຮ່ຢູ່ທີ່ປະມານ 5%. ການເປີດໂຮງງານທົດລອງນີ້ ແມ່ນເປັນບາດກ້າວທີ່ສຳຄັນ ໃນການກວດສອບຜົນ ທີ່ຈະໄດ້ຮັບທີ່ສາມາດນັບໄດ້ໃນໄລຍະການທົດລອງ ທີ່ຜ່ານມາ.



LXML ມຸ່ງໝັ້ນທີ່ຈະພັດທະນາແນວທາງການຜະລິດ ແຮ່ທາດ ແລະ ເພີ່ມປະສິດທິພາບຂອງການດຳເນີນງານຂອງຕົນ. ການນຳໃຊ້ເຕັກໂນໂລຊີ Resin In Leach ຊີ້ໃຫ້ເຫັນເຖິງ ຄວາມມຸ້ງໝັ້ນອັນລ້ຳໜ້ານີ້ ແລະ ຍັງສະທ້ອນໃຫ້ເຫັນເຖິງການອຸທິດຕົນ ຂອງບໍລິສັດພວກເຮົາ ຕໍ່ການປະດິດຄິດສ້າງ ດ້ານນະວະຕະກຳໃໝ່ໆ ແລະ ຄວາມຍືນຍົງ ເຂົ້າຂົງເຂດໃນອຸດສາຫະກຳຂຸດຄົ້ນບໍ່ແຮ່.

ພວກເຮົາຫວັງຢ່າງຍິ່ງວ່າ ຈະໄດ້ແບ່ງປັນຂໍ້ມູນ ດ້ານນະວະຕະກຳທາງເຕັກໂນໂລຊີ ທີ່ທັນສະໄໝໃຫ້ແກ່ສັງຄົມຫຼາຍຂຶ້ນ ໃນຂະນະທີ່ພວກເຮົາ ພວມດຳເນີນການທົດລອງໂຮງງານ ແລະ ຈະສືບຕໍ່ສຳຫຼວດຫາທ່າແຮງ ອັນເຕັມໄປດ້ວຍເຕັກໂນໂລຊີທີ່ໜ້າສົນໃຈແບບນີ້.





# ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ລົງກວດກາໂຄງການຂະຫຍາຍຂຸດຄົ້ນຄຳພາກຕາເວັນຕົກ

ຄະນະຜູ້ແທນ ຂັ້ນສູງກະຊວງພະລັງງານ ແລະ ບໍ່ແຮ່, ນຳໂດຍທ່ານ ທອງພັດ ອິນທະວົງ, ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ລົງຢ້ຽມຢາມພາກສະໜາມໂຄງການບໍ່ ຄຳ-ທອງ ເຊໂປນ ຂອງບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ເພື່ອກວດກາ ແລະ ປະເມີນໂຄງການ ຂະຫຍາຍຂຸດຄົ້ນຄຳພາກຕາເວັນຕົກ ຊຶ່ງເປັນໂຄງການສຳຄັນອັນໃໝ່ ທີ່ຈະໄດ້ຮັບການລິເລີ່ມຈັດຕັ້ງປະຕິບັດ ໃນໄລຍະອັນໃກ້ນີ້.

ຄະນະຜູ້ຕິດຕາມ ທ່ານຮອງລັດຖະມົນຕີ ທ່ານ ທອງພັດ ອິນທະວົງ ທີ່ມາຈາກພາກສ່ວນລັດຖະບານ ລວມມີ ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ; ທ່ານບຸນຍົງ ສີດາວົງ, ຫົວໜ້າກົມຄຸ້ມຄອງບໍ່ແຮ່; ທ່ານບຸນລ້ອມ ລີໄຊຍະລາດ, ຫົວໜ້າພະແນກ ພະລັງງານ ແລະ ບໍ່ແຮ່ແຂວງສະຫວັນນະເຂດ. ພ້ອມນີ້ຍັງມີຄະນະບໍລິຫານອາວຸໂສ ຈາກ LXML ໃຫ້ກຽດຕ້ອນຮັບຄະນະຢ້ຽມຢາມໃນຄັ້ງນີ້ ເຊິ່ງລວມມີທ່ານ ໂຈ ຊິນປົງ - ອຳນວນການ, ຮອງຜູ້ຈັດການໃຫຍ່ ດ້ານການສະໜັບສະໜູນທຸລະກິດ, ທ່ານແອນດຣິວ ບຣາວ - ຮອງຜູ້ຈັດການໃຫຍ່ ດ້ານການບຳລຸງຮັກສາ. ທ່ານ ສະໝານ ອະເນກາ - ຜູ້ອຳນວຍການໃຫຍ່, ທ່ານ ໄມໂຄລ ສະຕ໊ອດ - ຜູ້ຈັດການດ້ານການບໍລິການບໍ່ແຮ່. ທ່ານ ຄາວ ຣຽກ - ຜູ້ຈັດການດ້ານຄວາມປອດໄພ ແລະ ສິ່ງແວດລ້ອມ ແລະ ທ່ານພອນສະຫວັນ ຄຳວົງສາ - ຜູ້ຈັດການດ້ານບໍ່ແຮ່.

ຈຸດປະສົງຂອງການຢ້ຽມຢາມໃນຄັ້ງນີ້ ແມ່ນເພື່ອເປັນການຮັບຮູ້ເຖິງຄວາມຄືບໜ້າກ່ຽວກັບໂຄງການ ຂະຫຍາຍການຂຸດຄົ້ນຄຳພາກຕາເວັນຕົກ ແລະ ສຸມໃສ່ການຂໍອອກໃບອະນຸຍາດທີ່ກ່ຽວຂ້ອງກັບ ການດຳເນີນງານ. ໃນທີ່ປະຊຸມ ຄະນະບໍລິຫານງານອາວຸໂສ LXML ໄດ້ລາຍງານໂດຍຫຍໍ້ ກ່ຽວກັບຂອບເຂດຂອງວຽກງານຢູ່ບໍ່ຄຳ-ທອງ ເຊໂປນ, ລວມມີ ການປະກອບສ່ວນຂອງບໍລິສັດໃຫ້ແກ່ ສປປ ລາວ ແລະ ຊຸມຊົນທ້ອງຖິ່ນ. ທ່ານ ໂຈ ຊິນປົງ ໄດ້ສະແດງຄວາມຮູ້ບູນຄຸນ ຕໍ່ການສະໜັບສະໜູນ ດ້ວຍດີຕະຫຼອດມາຈາກ ພາກສ່ວນລັດຖະບານໃຫ້ແກ່ LXML ແລະ ໂຄງການເຊໂປນ ແລະ ຍັງໄດ້ຍົກໃຫ້ເຫັນເຖິງຄວາມຕັ້ງໃຈຂອງບໍລິສັດ ທີ່ຈະໄດ້ຮັບໃບອະນຸຍາດ ໃນການດຳເນີນງານຈາກ ລັດຖະບານໂດຍໄວໆນີ້.

ທ່ານ ຮອງລັດຖະມົນຕີ ໄດ້ສະແດງຄວາມຊົມເຊີຍ ຕໍ່ບໍລິສັດ ວ່າເປັນບໍລິສັດທີ່ມີຊື່ສຽງ ແລະ ໜ້ານັບຖືໃນ ສປປ ລາວ, ໂດຍໄດ້ມີບົດບາດທີ່ສຳຄັນ ໃນການປະກອບສ່ວນໃສ່ ການພັດທະນາເສດຖະກິດ-ສັງຄົມພາຍໃນປະເທດ, ພາຍໃນແຂວງ ແລະ ຊຸມຊົນອ້ອມຂ້າງ. ພ້ອມກັນນັ້ນ ທ່ານຍັງໄດ້ເນັ້ນເຖິງຄວາມສຳຄັນ ໃນການຮ່ວມມືຢ່າງໃກ້ຊິດລະຫວ່າງ LXML ແລະ ບັນດາໜ່ວຍງານ ທາງພາກລັດທີ່ກ່ຽວຂ້ອງ, ເປັນຕົ້ນແມ່ນເຈົ້າໜ້າທີ່ຂັ້ນເມືອງ ແລະ ພາກສ່ວນພະລັງງານ ແລະ ບໍ່ແຮ່ ຂັ້ນແຂວງ.

ພາຍຫຼັງກອງປະຊຸມ, ຄະນະຢ້ຽມຢາມ ໄດ້ລົງກວດກາພື້ນທີ່ຕົວຈິງໃນເຂດ ຂະຫຍາຍຂຸດຄົ້ນຄຳ ພາກຕາເວັນຕົກ ເຊິ່ງນຳໂດຍຕົວແທນຈາກ LXML. ຄະນະຢ້ຽມຢາມ ຍັງໄດ້ສະແດງຄວາມປະທັບໃຈ ຕໍ່ກັບການກວດກາສະຖານທີ່ໃນຄັ້ງນີ້.

ຕອນທ້າຍ, ທ່ານຮອງລັດຖະມົນຕີຍັງໄດ້ຮຽກຮ້ອງມາຍັງ LXML ຮີບຮ້ອນ ກະກຽມເອກະສານທີ່ກ່ຽວຂ້ອງ ກັບການຂໍໃບອານຸຍາດໃນການດຳເນີນງານ ສົ່ງໃຫ້ກະຊວງ ພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາ ການອອກໃບອານຸຍາດ ໂຄງການຂະຫຍາຍຂຸດຄົ້ນຄຳພາກຕາເວັນຕົກ. ທ່ານ ຍັງໄດ້ເນັ້ນໃຫ້ເຫັນ ເຖິງຄວາມສຳຄັນຂອງການສືບຕໍ່ ໃຫ້ການສະໜັບສະໜູນ ຈາກໜ່ວຍງານພາກລັດ ເພື່ອຜົນສຳເລັດດ້ານການດຳເນີນງານຂອງໂຄງການ.

ການຢ້ຽມຢາມໃນຄັ້ງນີ້, ໄດ້ເນັ້ນໃຫ້ເຫັນ ເຖິງຄວາມພະຍາຍາມໃນການຮ່ວມມື ລະຫວ່າງ LXML ແລະ ລັດຖະບານ ເພື່ອດຳເນີນງານ ການຂຸດຄົ້ນບໍ່ແຮ່ຢ່າງມີຄວາມຮັບຜິດຊອບ ແລະ ປະກອບສ່ວນ ໃສ່ການພັດທະນາເສດຖະກິດ-ສັງຄົມໃຫ້ດີຂຶ້ນ.

ຢູ່ບໍ່ຄຳ-ທອງ ເຊໂປນ ພວກເຮົາມຸ່ງໝັ້ນຕໍ່ຄວາມຮັບຜິດຊອບ ຂອງຕົນເອງ ໃນ ສປປ ລາວ ແລະ ຫວັງຢ່າງຍິ່ງ ທີ່ຈະສືບຕໍ່ຮ່ວມມືກັບຜູ້ມີສ່ວນຮ່ວມທຸກພາກສ່ວນ.

# LXML ມອບພາສີຊັບພະຍາກອນແຮ່ທາດ ໄຕມາດ 1 ແລະ 2 ສົກປີ 2024




ໃນວັນທີ 27 ສິງຫາ 2024, ທີ່ຫ້ອງວ່າການປົກຄອງ ແຂວງສະຫວັນນະເຂດ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ມອບພາສີ ຊັບພະຍາກອນແຮ່ທາດ ປະຈຳໄຕມາດ 1 ແລະ 2 ສົກປີ 2024 ຈຳນວນ US$ 12,047,288.78 (ສິບສອງລ້ານສີ່ສິບເຈັດພັນສອງຮ້ອຍແປດສິບແປດ ແລະ ເຈັດສິບແປດເຊັນ ໂດລາສະຫະລັດ) ໃຫ້ແກ່ແຂວງສະຫວັນນະເຂດ ເຊິ່ງຮັບໂດຍ ທ່ານ ເພັດດາລາ ແກ້ວສາລີ - ຫົວໜ້າສວຍສາອາກອນແຂວງ ໂດຍໃຫ້ກຽດ ເປັນສັກຂີພະຍານ ໂດຍ ທ່ານ ບຸນໂຈມ ອຸບົນປະເສີດ - ເຈົ້າແຂວງສະຫວັນນະເຂດ ພ້ອມຄະນະຜູ້ຕ່າງໜ້າ ຈາກພະແນກການກ່ຽວຂ້ອງ ພາຍໃນແຂວງ. ຝ່າຍບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ແມ່ນມອບໂດຍ ທ່ານ ສະໝານ ອະເນກາ - ຜູ້ອຳນວຍການໃຫຍ່ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ແລະ ຫົວໜ້າຫ້ອງການສາຂາບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ປະຈຳແຂວງສະຫວັນນະເຂດ.

ໃນໂອກາດນີ້ ທ່ານ ສະໝານ ອະເນກາ ໄດ້ກ່າວຂອບໃຈເປັນຢ່າງຍິ່ງ ມາຍັງທ່ານເຈົ້າແຂວງທີ່ໄດ້ສະລະເວລາ ໃນການມອບຄັ້ງນີ້ ເຊິ່ງເປັນການມອບພາສີຊັບພະຍາກອນແຮ່ທາດ 02 ງວດພ້ອມກັນ ຄື ໄຕມາດ 1 ແລະ 2 ສົກປີ 2024, ພ້ອມທັງໄດ້ຣຽນລາຍງານ ກ່ຽວກັບວຽກງານການໄກ່ເກ່ຍດິນ ໃນເຂດຂຸດຄົ້ນບໍ່ໃໝ່ທາງຕາເວັນຕົກ ແລະ ບັນຫາຕ່າງໆ ທີ່ຕ້ອງໄດ້ຂໍການສະໜັບສະໜູນຈາກພາກລັດ ແລະ ທັງໄດ້ ລາຍງານສະພາບການຜະລິດທີ່ລຸດຄາດໝາຍ ໃນສອງເດືອນຜ່ານມາ.

ໃນໂອກາດນີ້ ທ່ານເຈົ້າແຂວງສະຫວັນນະເຂດ ກໍ່ໄດ້ກ່າວຂອບໃຈ ມາຍັງທ່ານຜູ້ອຳນວຍການໃຫຍ່ ແລະ ຄະນະຜູ້ບໍລິຫານບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ທີ່ໄດ້ມອບເງິນພາສີຄ່າ ຊັບພະຍາກອນແຮ່ທາດດັ່ງກ່າວ ໃຫ້ແກ່ແຂວງສະຫວັນນະເຂດ ເຊິ່ງແຕ່ເລີ່ມຕົ້ນຈົນເຖິງປະຈຸບັນ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ກໍ່ໄດ້ສະໜັບສະໜູນ ຕະຫລອດມາ, ແຂວງສະຫວັນນະເຂດມີຄວາມໂຊກດີ ທີ່ໄດ້ລາຍຮັບສ່ວນນີ້ຈາກບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ນອກນັ້ນຍັງໄດ້ມີການພັດທະນາທ້ອງຖິ່ນ ຈາກກອງທຶນພັດທະນາທ້ອງຖິ່ນ ຂອງບໍລິສັດ ເຊິ່ງເຫັນໄດ້ມີຫລາຍຢ່າງ ທີ່ມີການພັດທະນາຂຶ້ນ, ສ່ວນຂໍ້ຫຍຸ້ງຍາກຕ່າງໆ ແຂວງມີຄວາມຍິນດີໃຫ້ການຊ່ວຍເຫລືອ ເພື່ອບໍ່ໃຫ້ມີຜົນກະທົບ ຕໍ່ການປະຕິບັດງານຂອງບໍລິສັດ ແລະ ງົບປະມານຂອງແຂວງ.








# LXML ມອບເງິນພາສີຊັບພະຍາກອນແຮ່ທາດ ປະຈຳໄຕມາດທີ 3 ສົກປີ 2024

ໃນຕອນເຊົ້າຂອງວັນທີ 16 ທັນວາ 2024, ທີ່ຫ້ອງວ່າການປົກຄອງແຂວງສະຫວັນນະເຂດ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ມອບພາສີ ຊັບພະຍາກອນແຮ່ທາດ ປະຈຳໄຕມາດ 3 ສົກປີ 2024 ຈຳນວນ US$ 4,665,258.55 (ສີ່ລ້ານຫົກແສນ ຫົກສິບຫ້າພັນສອງຮ້ອຍຫ້າສິບແປດ ໂດລາສະຫະລັດ ແລະ ຫ້າສິບຫ້າເຊັນ) ໃຫ້ແກ່ແຂວງສະຫວັນນະເຂດ, ຮັບໂດຍ ທ່ານ ເພັດດາລາ ແກ້ວສາລີ - ຫົວໜ້າສວຍສາອາກອນແຂວງສະຫວັນນະເຂດ, ເປັນກຽດສັກຂີພະຍານ ໃນການມອບໂດຍທ່ານ ປອ ແສນສັກ ສຸລິສັກ - ຮອງເຈົ້າແຂວງສະຫວັນນະເຂດ ພ້ອມຄະນະຜູ້ຕ່າງໜ້າຈາກພະແນກການທີ່ກ່ຽວຂ້ອງ ພາຍໃນແຂວງ. ຕາງໜ້າຂຶ້ນມອບຈາກບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໂດຍ ທ່ານ ສະໝານ ອະເນກາ - ຜູ້ອຳນວຍການໃຫຍ່ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ແລະ ຫົວໜ້າຫ້ອງການ ສາຂາບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ປະຈຳແຂວງສະຫວັນນະເຂດ.

ໃນໂອກາດດັ່ງກ່າວ ທ່ານ ສະໝານ ອະເນກາ ໄດ້ກ່າວສະແດງຄວາມຂອບໃຈມາຍັງ ທ່ານຮອງເຈົ້າແຂວງພ້ອມດ້ວຍຄະນະ ທີ່ໄດ້ໃຫ້ກຽດເປົ້າຮັບ-ມອບເງິນພາສີໃນຄັ້ງນີ້ ແລະ ກໍ່ສະແດງຄວາມຂອບໃຈມາຍັງການນຳເມືອງ ແລະ ແຂວງທີ່ໄດ້ໃຫ້ການສະໜັບສະໜູນ ບໍລິສັດ ກ່ຽວກັບ ວຽກງານເຂົ້າເຖິງທີ່ດິນ ໃນເຂດໂຄງການຂະຫຍາຍ ຂຸດຄົ້ນຄຳພາກຕາເວັນຕົກ ພ້ອມດຽວກັນນັ້ນ ບໍລິສັດກໍ່ມີຄວາມພູມໃຈທີ່ໄດ້ປະກອບສ່ວນ ໃນການພັດທະນາທ້ອງຖິ່ນຢ່າງສະເໝີມາ.

ທ່ານຮອງເຈົ້າແຂວງ ສະຫວັນ ນະເຂດ ກໍ່ໄດ້ກ່າວຂອບໃຈ ມາຍັງທ່ານຜູ້ອຳນວຍການໃຫຍ່ ແລະ ຄະນະຜູ້ບໍລິຫານບໍລິສັດ ຊື່ເຟີງໂກລ໌ ແລະ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ທີ່ໄດ້ເອົາໃຈໃສ່ ໃນການມອບພັນທະຕ່າງໆ ໄດ້ຖືກຕ້ອງຕາມກຳນົດເວລາ ພ້ອມທັງມີຄວາມດີໃຈ ທີ່ບັນຫາຕ່າງໆ ກ່ຽວກັບການເຂົ້າເຖິງທີ່ດິນ ໃນເຂດໂຄງການຂະຫຍາຍ ຂຸດຄົ້ນຄຳພາກຕາເວັນຕົກ ໄດ້ຖືກແກ້ໄຂໄປດ້ວຍດີ ແລະ ໃນໂອກາດປີໃຫມ່ທີ່ຈະມາເຖິງນີ້ ທ່ານຮອງເຈົ້າແຂວງກໍ່ໄດ້ອວຍພອນໄຊ ໃຫ້ແກ່ຄະນະຜູ້ບໍລິຫານບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ພ້ອມດ້ວຍພະນັກງານຂອງບໍລິສັດທຸກທ່ານ.





# ກະຊວງສາທາລະນະສຸກ ແລະ LXML ຮ່ວມມື ຈັດຕັ້ງປະຕິບັດການວຽກງານ HIA ຢູ່ເຂດ ໂຄງການຂະຫຍາຍຂຸດຄົ້ນຄໍາພາກຕາເວັນຕົກ

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈໍາກັດ (LXML) ຮ່ວມກັບ ກະຊວງສາທາລະນະສຸກ ພ້ອມດ້ວຍ ບໍລິສັດ ESL ຈັດກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມ ຂັ້ນສູນກາງ ກ່ຽວກັບບົດລາຍງານການປະເມີນຜົນກະທົບຕໍ່ສຸຂະພາບ (HIA) ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາວຽກງານສາທາລະນະສຸກ 3 ປີ ໃຫ້ແກ່ໂຄງ ການຂະຫຍາຍການຂຸດຄົ້ນຄໍາ ພາກຕາເວັນຕົກ ຂອງໂຄງການຂຸດຄົ້ນຄໍາ-ທອງ ເຊໂປນ ຂອງບໍລິສັດລ້ານຊ້າງ ມິເນໂຣນສ໌ ຈໍາກັດ.

ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ດຣ ນາງ ວຽງຂັນ ພິໄຊ ຮອງຫົວໜ້າກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກ, ທ່ານ ປອ ພູລໍາມອນ ສີຫາວົງ ຮອງຫົວໜ້າຫ້ອງວ່າການປົກຄອງ ແຂວງສະຫວັນນະເຂດ, ທ່ານ ຜາລີ ສີບຸນຍາ ຮອງຫົວໜ້າພະແນກ ສາທາລະນະສຸກແຂວງສະຫວັນນະເຂດ ແລະ ທ່ານ ສີຄູນ ບານມະນີວົງ ຮອງເຈົ້າເມືອງ ວິລະບູລີ. ມີບັນດາຂະແໜງບໍ່ແຮ່, ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພ້ອມດ້ວຍຂະແໜງສາທາລະນະສຸກ ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ພະນັກງານວິຊາການຈາກ LXML ເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອເປັນການລາຍງານການຈັດຕັ້ງປະຕິບັດວຽກງານດ້ານສຸຂະພາບ, ວຽກງານການດໍາ ເນີນງານທົ່ວໄປຂອງ LXML, ພ້ອມທັງເປັນການເກັບກໍາຂໍ້ມູນພື້ນຖານດ້ານສຸຂະພາບຊຸມຊົນ ໃນເຂດພັດທະນາໂຄງການ, ກໍານົດຜົນກະທົບດ້ານບວກ ແລະ ດ້ານລົບຕໍ່ສຸຂະພາບຊຸມຊົນ, ກໍານົດແຜນງານ, ນະໂຍບາຍ ແລະ ກິດຈະກໍາ ເພື່ອເປັນບ່ອນອີງ ໃນການຈັດສັນງົບປະມານໃນການຊຸກຍູ້ ແລະ ຕິດຕາມວຽກງານສຸຂະພາບຂອງຊຸມຊົນ ພາຍໃນໂຄງການ.

ທ່ານ ດຣ. ນາງ ວຽງຂັນ ພິໄຊ ຮອງຫົວໜ້າກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກ່າວວ່າ "ກອງປະຊຸມຄັ້ງນີ້ ຖືວ່າເປັນກອງປະຊຸມ HIA ຄັ້ງສຸດທ້າຍ ກ່ຽວກັບໂຄງການຂະຫຍາຍການຂຸດຄົ້ນຄໍາພາກຕາເວັນຕົກ ກ່ອນກ້າວສູ່ຂະບວນການພິຈາລະນາອອກໃບຢັ້ງຢືນ ເພື່ອຮັບຮອງບົດລາຍງານ HIA ໄລຍະ 3 ປີ (2024-2026) ແລະ ແຜນຄຸ້ມຄອງ ຕິດຕາມ ກວດກາວຽກງານສາທາລະນະສຸກ."

ການປະເມີນຜົນກະທົບຕໍ່ສຸຂະພາບແມ່ນຂະບວນການສຶກສາ, ວິໄຈຂໍ້ມູນ, ຄາດຄະເນຜົນກະທົບຕໍ່ສຸຂະພາບຊຸມຊົນ ໃນອະນາຄົດ ທັງທາງກົງ ແລະ ທາງອ້ອມ ທີ່ອາດຈະເກີດຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ພ້ອມທັງ ກໍານົດວິທີການ, ມາດຕະການທີ່ເໝາະສົມເພື່ອປ້ອງກັນ, ຫຼີກລ້ຽງ, ແລະ ຫຼຸດຜ່ອນຜົນກະທົບ ຕໍ່ສຸຂະພາບຊຸມຊົນທີ່ອາດຈະເກີດຂຶ້ນໃນອະນາຄົດ.

ຜົນຂອງການປະເມີນຜົນກະທົບຕໍ່ສຸຂະພາບ ເປັນໜຶ່ງໃນເງື່ອນໄຂຕົ້ນຕໍໃນການພິຈາລະນາການອະນຸມັດໂຄງການ ລົງທຶນ ຫຼື ກິດຈະການຕ່າງໆ ທີ່ຄາດວ່າອາດມີຄວາມສ່ຽງ ຫຼື ອາດຈະສ້າງຜົນກະທົບຢ່າງຫຼວງຫຼາຍຕໍ່ສຸຂະພາບຊຸມຊົນ.

ນັບຕັ້ງແຕ່ ບໍ່ຄໍາ-ທອງເຊໂປນ ເລີ່ມດໍາເນີນການຜະລິດໃນປີ 2003, LXML ໄດ້ເລັງເຫັນຄວາມສໍາຄັນດ້ານສຸຂະພາບ ຂອງພະນັກງານ ແລະ ຊຸມຊົນອ້ອມຂ້າງ ໂດຍໄດ້ໃຫ້ການສະໜັບສະໜູນຢ່າງກວ້າງຂວາງ ແກ່ຂະແໜງ



ສາທາລະນະສຸກ ເປັນຕົ້ນແມ່ນການສ້າງອາຄານພັກຟື້ນຫຼັງໃໝ່ໃຫ້ແກ່ໂຮງໝໍເມືອງ ວິລະບູລີ, ສະໜອງລົດສຸກເສີນ ແລະ ອຸປະກອນການແພດຕ່າງໆ ໃຫ້ແກ່ໂຮງໝໍແຂວງສະຫວັນນະເຂດ ແລະ ໂຮງໝໍມິດຕະພາບ, ການຮ່ວມມືທີ່ເປັນເອກະລັກ ກັບກະຊວງສາທາລະນະສຸກ ແລະ ອົງການ UNICEF (1000 Days Project) ເພື່ອແກ້ໄຂບັນຫາໂພຊະນາການ ຂອງແມ່ ແລະ ເດັກ, ນອກນີ້ LXML ຍັງໄດ້ໃຫ້ການສະໜັບສະໜູນ ກອງປະຊຸມແພດ-ກຸມມານເວດ ຜ່ານອົງການ Health Frontiers ນໍາອີກດ້ວຍ.





# ກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມ ຂັ້ນສູນກາງ ກ່ຽວກັບ ໂຄງການຂະຫຍາຍເຂດຂຸດຄົ້ນຄໍາພາກຕາເວັນຕົກ

LXML ໄດ້ເຂົ້າຮ່ວມປະຊຸມປຶກສາຫາລືແບບມີສ່ວນຮ່ວມ ຂັ້ນສູນກາງ ກ່ຽວກັບ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ລວມທັງ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ສໍາລັບ ໂຄງການ ຂະຫຍາຍເຂດຂຸດຄົ້ນຄໍາພາກຕາເວັນຕົກ ຢູ່ເຂດ ເມືອງວິລະບູລີ ແຂວງສະຫວັນນະເຂດ, ໃນຕອນເຊົ້າ ຂອງວັນທີ 9 ທັນວາ 2024 ທີ່ ນະຄອນຫຼວງວຽງຈັນ ຊຶ່ງຈັດໂດຍ ກົມສິ່ງແວດລ້ອມ (ກສລ), ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ກຊສ) ຮ່ວມກັບ ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ພຊສ) ແຂວງສະຫວັນນະເຂດ ໂດຍການເປັນປະທານຂອງ ທ່ານ ພູວົງ ຫຼວງໄຊຊະນະ, ຮອງລັດຖະມົນຕີ ກຊສ ແລະ ເຂົ້າຮ່ວມໂດຍ ທ່ານ ກົງແກ້ວ ມີວໍລະຈັກ, ປະທານສະພາປະຊາຊົນແຂວງສະຫວັນນະເຂດ, ທ່ານ ລັດສະໝີ ວໍລະລາດ ຮອງຫົວໜ້າ ກສລ, ທ່ານ ແສນສັກ ພິມວົງສາ ຫົວໜ້າ ພຊສ ແຂວງສະຫວັນນະເຂດ, ທ່ານ ໄພມະນີ ວົງໄຊຄໍາ ຮອງເຈົ້າເມືອງວິລະບູລີ, ບໍລິສັດທີ່ປຶກສາສິ່ງແວດລ້ອມ ພ້ອມດ້ວຍບັນດາທ່ານຜູ້ຕາງໜ້າຈາກສູນກາງ ແລະ ທ້ອງຖິ່ນ ລວມທັງບັນດາບ້ານທີ່ຢູ່ອ້ອມຂ້າງເຂດໂຄງການເຂົ້າຮ່ວມ.

ໃນກອງປະຊຸມ ໄດ້ມີການສະເໜີລາຍງານ ປະຫວັດຄວາມເປັນມາ, ສະພາບລວມ, ຮ່າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການ ພ້ອມທັງຮັບຟັງ ການກໍານົດບັນດາມາດຕະການຫຼຸດຜ່ອນ, ແກ້ໄຂຜົນກະທົບ ແລະ ຄວາມສ່ຽງດ້ານຕ່າງໆ ຂອງໂຄງການຂຸດຄົ້ນ ແຮ່ຄໍາ-ທອງ ເຊໂປນ ທີ່ຕັ້ງຢູ່ເຂດ ເມືອງວິລະບູລີ ແຂວງສະຫວັນນະເຂດ ຂອງ LXML ຊຶ່ງໄດ້ຮັບອະນຸຍາດຈາກລັດຖະບານ ໃນການສໍາຫຼວດ ແລະ ຂຸດຄົ້ນແຮ່ທາດແຕ່ປີ 2002 ໃນເນື້ອທີ່ ທັງໝົດ 1,127 ກມ2, ໃນນັ້ນ ໄດ້ຮັບຂະຫຍາຍການເຂດອະນຸຍາດຂຸດຄົ້ນຕື່ມອີກ 13.92 ກມ$^2$ ໃນປີ ຈາກ 116,96 ກມ$^2$ 2024 ມາເປັນ 130,88 ກມ$^2$ ແລະ ເນື້ອທີ່ສໍາລັບການສໍາຫຼວດຍັງເຫລືອ 996,12 ກມ$^2$, ຊຶ່ງຜ່ານ ການສໍາຫຼວດມາຮອດປັດຈຸບັນ ເຫັນວ່າ ມີຄວາມເປັນໄປທາງດ້ານເສດຖະກິດ, ສະນັ້ນ ໂຄງການ ຈຶ່ງມີຄວາມຕ້ອງການຂະຫຍາຍ ເນື້ອທີ່ຂຸດຄົ້ນຕື່ມ ຈໍານວນ 13.92 ກມ$^2$, ຊຶ່ງຕັ້ງຢູ່ທາງທິດຕາເວັນຕົກ ຂອງເຂດ ທີ່ໄດ້ຮັບອະນຸຍາດ ຂຸດຄົ້ນແຮ່ຄໍາ-ທອງ ໃນປັດຈຸບັນ ແລະ ເນື່ອງຈາກວ່າເຂດດັ່ງກ່າວ ຕັ້ງຢູ່ທິດຕາເວັນຕົກ ຈຶ່ງເອີ້ນວ່າ ໂຄງການຂະຫຍາຍການຂຸດຄົ້ນຄໍາພາກຕາເວັນຕົກ. ສໍາລັບ ການດໍາເນີນໂຄງການຂຸດຄົ້ນຄໍາເຊໂປນຕັ້ງແຕ່ເລີ່ມການ ຜະລິດຄໍາ-ທອງ ແຕ່ປີ 2003 ຮອດປັດຈຸບັນ ແມ່ນສາມາດຜະລິດຄໍາໄດ້ຫຼາຍກວ່າ 1.5 ລ້ານອອນສ໌ ແລະ ທອງ ໄດ້ຫຼາຍກວ່າ 1.1 ລ້ານໂຕນ ແລະ ສາມາດມອບພັນທະອັນຫຼວງຫຼາຍໃຫ້ລັດຖະບານລາວ. ນອກຈາກນັ້ນ ຍັງປະກອບສ່ວນສໍາຄັນເຂົ້າ ໃນການຈ້າງງານໃນທ້ອງຖິ່ນ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ການຮ່ວມມືກັບທຸລະກິດທ້ອງຖິ່ນ, ຊຶ່ງເປັນການຊຸກຍູ້ການຂະຫຍາຍຕົວດ້ານເສດຖະກິດ-ສັງຄົມຂອງລາວ.

ໃນໂອກາດດັ່ງກ່າວ, ປະທານກອງປະຊຸມ ໄດ້ເນັ້ນໃຫ້ເຈົ້າຂອງໂຄງການ ເອົາໃຈໃສ່ປັບປຸງ ຮ່າງບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຕາມຄໍາຄິດເຫັນຂອງທຸກພາກສ່ວນໃນກອງປະຊຸມຄັ້ງນີ້ ແລະ ນໍາສິ່ງມາຍັງ ກຊສ ເພື່ອດໍາເນີນການທົບທວນຕື່ມ ແລະ ພິຈາລະນາການສະເໜີອອກໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ແລະ ສິ່ງສໍາຄັນ ຖ້າເມື່ອໃດ ບໍລິສັດ ໄດ້ຮັບໃບຢັ້ງຢືນກ່ຽວກັບ ສິ່ງແວດລ້ອມແລ້ວ, ໂຄງການ ຕ້ອງປະຕິບັດມາດຕະການສິ່ງແວດລ້ອມ ດັ່ງທີ່ໄດ້ລະບຸໄວ້ໃນເອກະສານດັ່ງກ່າວ ຢ່າງເຂັ້ມງວດ ເພື່ອຫຼີກລ່ຽງບັນຫາຜົນກະທົບທີ່ຈະເກີດຂຶ້ນຕາມມາພາຍຫຼັງ.

ບໍລິສັດ LXML ໃນນາມເຈົ້າຂອງໂຄງການ ຈະນໍາເອົາຄວາມຄິດເຫັນ, ຂໍ້ສະຫຼຸບ ແລະ ບົດຮຽນທີ່ຖອດຖອນໄດ້ໃນກອງປະຊຸມ ນໍາໄປທົບທວນຄືນຮ່ວມກັບ ບໍລິສັດທີ່ປຶກສາເພື່ອປັບປຸງ ແລະ ແກ້ໄຂຂໍ້ຄົງຄ້າງທີ່ກ່ຽວຂ້ອງຕ່າງໆ ໃຫ້ດີທີ່ສຸດຕາມຄວາມຮຽກຮ້ອງຕ້ອງການ ແລະ ໃຫ້ສາມາດນໍາໄປຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ພ້ອມທັງເປັນແບບຢ່າງທີ່ດີໃຫ້ແກ່ຫຼາຍໂຄງການບໍ່ແຮ່ໃນລາວ.





# LXML ຍ້ອງຍໍພະນັກງານ 161 ຄົນທີ່ເຮັດວຽກ ຍາວນານກັບບໍລິສັດ

ຢູ່ທີ່ພາກສະໜາມ ບໍ່ຄຳ-ທອງ ເຊໂປນ, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ມອບໃບຍ້ອງຍໍໃຫ້ແກ່ພະນັກງານ ຈຳນວນ 161 ຄົນ ທີ່ມີຜົນງານດີເດັ່ນໃນການອຸທິດຕົນເຮັດວຽກ ກັບບໍລິສັດເປັນເວລາຍາວນານ ເຊິ່ງມີການຈັດລຳດັບຕັ້ງແຕ່ 5 ຫາ 20 ປີຕາມລຳດັບດັ່ງຕໍ່ໄປນີ້: ມີພະນັກງານຈຳນວນ 63 ຄົນ ທີ່ເຮັດວຽກຍາວນານເປັນເວລາ 5 ປີ, 9 ຄົນທີ່ເຮັດວຽກຍາວນານເປັນເວລາ 10 ປີ, ມີ 66 ຄົນທີ່ເຮັດວຽກຍາວນານເປັນເວລາ 15 ປີ ແລະ ມີຈຳນວນ 23 ຄົນເຮັດວຽກຍາວນານຄົບຮອບ 20 ປີ.

LXML ຍາມໃດກໍ່ໃຫ້ບູລິມະສິດສຳຄັນແກ່ແຮງງານທ້ອງຖິ່ນຢູ່ສະເໝີ ຊຶ່ງໃນນັ້ນມີ ພະນັກງານ ແລະ ຄົນງານຜູ້ຮັບເໝົາປະມານ 4,000 ຄົນ ໃນນັ້ນ 93 ສ່ວນຮ້ອຍເປັນຄົນລາວ, ຊຶ່ງ 63 ສ່ວນຮ້ອຍ ແມ່ນມາຈາກຊຸມຊົນທ້ອງຖິ່ນ ແລະ 25 ສ່ວນຮ້ອຍເປັນແມ່ຍິງ. ສິ່ງເຫຼົ່ານີ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງບໍລິສັດ ໃນການສົ່ງເສີມວັດທະນະທຳ, ຄວາມຫຼາກຫຼາຍໃນອົງກອນ ແລະ ການປະກອບສ່ວນເຂົ້າໃນການພັດທະນາທ້ອງຖິ່ນ.

ເພື່ອສືບຕໍ່ການພັດທະນາຢ່າງຕໍ່ເນື່ອງ LXML ຈຶ່ງໄດ້ຍົກລະດັບທັກສະ ແລະ ການພັດທະນາຄວາມສາມາດທາງດ້ານແຮງງານ, LXML ໄດ້ລົງທຶນຢ່າງຫຼວງຫຼາຍ ເຂົ້າໃນການພັດທະນາ ພະນັກງານຂອງຕົນ, ໂດຍມາຮອດປະຈຸບັນ, ໄດ້ຈັດສັນງົບປະມານ 4 ລ້ານໂດລາສະຫະລັດ ເປັນທຶນການສຶກສາຂັ້ນສາມໃຫ້ແກ່ພະນັກງານຄົນລາວ. ສະໜັບສະໜູນອຸປະກອນຝຶກອົບຮົມ ແກ່ໂຮງຮຽນວິຊາຊີບ ສະຫວັນນະເຂດ ຫຼາຍກວ່າ 680,000 ໂດລາສະຫະລັດ, ມີຈຳນວນຄົນຝຶກອົບຮົມ 10,625 ຄົນ ແລະ ສະໜອງຊົ່ວໂມງໃນການຝຶກອົບຮົມທັງໝົດຫຼາຍກວ່າ 16,175 ຊົ່ວໂມງ ໃນກາງປີ 2024, ມີໂຄງການຝຶກອົບຮົມຂີດຄວາມສາມາດ ໃນພາກສະໜາມ ຊຶ່ງລວມທັງຄູຝຶກ, ການຝຶກອົບຮົມ ຢ່າງເປັນທາງການ ແລະ ຄຽງຄູ່ກັບການປະຕິບັດວຽກ. ນອກຈາກນັ້ນ, ຍັງສືບຕໍ່ສະໜອງທຶນການກສຶກສາແກ່ພະນັກງານ ຝຶກຫັດທີ່ມາຈາກຊຸມຊົນທ້ອງຖິ່ນຈຳນວນ 18 ຄົນ ກຳລັງເຂົ້າສຶກສາຢູ່ທີ່ໂຮງຮຽນເຕັກນິກ ລາວ-ເຢຍລະມັນ (LGTC) ໃນສົກປີ 2024 ຫາ 2028. ມາຮອດປັດຈຸບັນ, LXML ໄດ້ສະໜອງ ເວລາຝຶກອົບຮົມທາງດ້ານວິຊາຊີບ ໃຫ້ແກ່ພະນັກງານຄົນລາວ ຫຼາຍກວ່າ 23,000 ຊົ່ວໂມງ ໂດຍຜ່ານການຝຶກອົບຮົມທັງພາຍໃນ ແລະ ພາຍນອກ, ໃນສະຖານທີ່ເຮັດວຽກ ແລະ ໄປສຶກສາຢູ່ຕ່າງປະເທດ.

LXML ມຸ່ງໝັ້ນທີ່ຈະສະໜັບສະໜູນພະນັກງານຂອງຕົນ ແລະ ສົ່ງເສີມຄວາມສາມາດ ຂອງບຸກຄາລະກອນທ້ອງຖິ່ນ ໃຫ້ສາມາດຂຶ້ນສູ່ຕຳແໜ່ງຫົວໜ້າສາຍງານ ແລະ ຜູ້ບໍລິຫານ ໂດຍຜ່ານ ການສະໜອງໂຄງການພັດທະນາທັກສະ ແລະ ພາວະຜູ້ນຳທີ່ເປັນທີ່ຍອມຮັບ ເພື່ອຊຸກຍູ້ຄົນລຸ້ນຕໍ່ໄປໃຫ້ສາມາດ ກາຍເປັນຜູ້ຊ່ຽວຊານ ທາງດ້ານການດຳເນີນງານດ້ານບໍ່ແຮ່ໃນລາວ.









# LXML ຊ່ວຍອຸປະກອນກໍ່ສ້າງຫ້ອງນ້ຳໃຫ້ຊຸມຊົນ ອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ໃນໄລຍະທີ II

ເມື່ອບໍ່ດົນມານີ້ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ມອບອຸປະກອນ ກໍ່ສ້າງຫ້ອງນ້ຳໃຫ້ແກ່ 10 ໝູ່ບ້ານບູລິມະສິດທີ່ຢູ່ອ້ອມຂ້າງຂອງ ບໍ່ຄຳ-ທອງ ເຊໂປນ ພາຍໃຕ້ໂຄງການ HIA 2024 ຫຼື ໂຄງການປະເມີນຜົນກະທົບ ຕໍ່ສຸຂະພາບຂອງຊຸມຊົນ ໄລຍະທີສອງ 2024. ເຂົ້າຮ່ວມໃນການມອບ-ຮັບ ມີບັນດາຫົວໜ້າສາຍງານ ຈາກຝ່າຍບໍລິສັດ LXML, ພະນັກງານວິຊາການທີ່ກ່ຽວຂ້ອງ, ມີຜູ້ຕ່າງໜ້າຈາກເມືອງວິລະບູລີ, ພະແນກສາທາລະນະສຸກເມືອງ, ອຳນາດການປົກຄອງບ້ານ ແລະ ປະຊາຊົນເຂົ້າຮ່ວມ.

ໂຄງການດັ່ງກ່າວປະກອບມີ 10 ບ້ານເປົ້າໝາຍ ເຊັ່ນ: ບ້ານກົກໝາກ, ບ້ານແກ້ງເຫຼັກເໜືອ, ບ້ານຜາພີລາງ, ບ້ານນາແອະ, ບ້ານໜອງກະປາງ, ບ້ານນາມິນ, ບ້ານສິບສະລຸງ, ບ້ານສະເລາະ, ບ້ານປະກອຍ ແລະ ບ້ານກະຫຼາຍ. ລວມມູນຄ່າການສະໜອງວັດຖຸອຸປະກອນທັງໝົດແມ່ນ 747,940,000 ກີບ ຫຼື 34,239 ໂດລາ ສະຫະລັດ ແຕ່ລະຄອບຄົວ ໃນບັນດາບ້ານດັ່ງກ່າວແມ່ນໄດ້ຮັບ ອຸປະກອນທັງໝົດລວມມີ 7 ລາຍການດັ່ງນີ້:

1. ທໍ່ແຄງສ້າງ P100 3 ທໍ່.
2. ຫົວວິດ 1 ອັນ.
3. ສັງກະສີ 4 ແຜ່ນ.
4. ຕະປູກຸບຕອກສັງກະສີ 1 ກັບ.
5. ຊີມັງແດງ 1 ຊອງ.
6. ທໍ່ລະບາຍອາກາດ 1 ອັນ.
7. ຝາປິດທໍ່ແຄງສ້າງ P100 1 ຝາ.

ການຊ່ວຍເຫຼືອດັ່ງກ່າວກໍແມ່ນ ເພື່ອເພີ່ມອັດຕາການນຳໃຊ້ວິດຖ່າຍ ທີ່ຖືກຫຼັກສຸຂະອະນາໄມທີ່ດີ ຂອງບັນດາໝູ່ບ້ານໃນຊຸມຊົນ ເມືອງວິລະບູລີ ພ້ອມທັງເປັນການ ໃຫ້ສາມາດບັນລຸເປົ້າໝາ ຍທາງດ້ານສຸຂະພາບທີ່ທາງສະພາ ແລະ ແຂວງໄດ້ວາງໄວ້. ນອກນີ້, ກໍເພື່ອສ້າງບ້ານເປົ້າຫມາຍ ໃຫ້ກາຍເປັນບ້ານຢຸດຕິການຖ່າຍຊະຊາຍພາຍໃນປີ 2024, ຈຶ່ງໄດ້ມີການສົມທົບທຶນ, ສະໜອງວັດສະດຸ ແລະ ອຸປະກອນໃນການການກໍ່ສ້າງວິດຖ່າຍ ໃຫ້ສຳເລັດຕາມເປົ້າທີ່ໄດ້ວາງໄວ້, ເຊິ່ງ LXML ມຸ່ງໝັ້ນທີ່ຈະອຳນວຍຄວາມສະດວກໃນການກໍ່ສ້າງ ຈົນຈະປະສົບຜົນສຳເລັດ ແລະ ທັງເປັນອີກສ່ວນໜຶ່ງຂອງໂຄງການລິເລີ່ມ ທາງດ້ານສຸຂະພາບທີ່ສຳຄັນນີ້.







# ພິທີ ມອບ-ຮັບໂຄງການ ລະບົບນ້ຳສະອາດຊຸມຊົນໃຫ້ແກ່ ປະຊາຊົນບ້ານເມືອງຫຼວງ

ເມື່ອວັນທີ 28 ສິງຫາ 2024 ຜ່ານມານີ້ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ຮ່ວມກັບ ອຳນາດການປົກຄອງເມືອງ ວິລະບູລີ ໄດ້ຈັດພິທີເປີດນຳໃຊ້ ແລະ ມອບໂຄງການກໍ່ສ້າງ ນ້ຳສະອາດຊຸມຊົນ ໃຫ້ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນບ້ານເມືອງຫຼວງ, ເມືອງວິລະບູລີ, ແຂວງສະຫວັນນະເຂດ ໂດຍການເຂົ້າຮ່ວມເປັນປະທານຂອງ ທ່ານ ວາລີຍະ ສີຈັນທອງທິບ ເຈົ້າເມືອງວິລະບູລີ, ທ່ານ ສະໝານ ອະເນກາ ຜູ້ອຳນວຍການໃຫຍ່ LXML, ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂຄງການສະໜອງນ້ຳສະອາດຊຸມຊົນນີ້ ແມ່ນໜຶ່ງໃນໂຄງການທີ່ສຳຄັນ ທີ່ນອນຢູ່ໃນແຜນຍຸດທະສາດການພັດທະນາທ້ອງຖິ່ນຂອງບໍລິສັດ, ຈຸດປະສົງຕົ້ນຕໍແມ່ນເພື່ອສະໜອງແຫຼ່ງນ້ຳສະອາດ ໃຫ້ຊຸມຊົນບ້ານເປົ້າໝາຍທີ່ນອນຢູ່ໃນເຂດອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ໂດຍສະເພາະແມ່ນ ການສະໜອງນ້ຳສະອາດໃຫ້ແກ່ພໍ່ແມ່ປະຊາຊົນ ຊາວບ້ານເມືອງຫຼວງ ໄດ້ນຳໃຊ້ຢ່າງທົ່ວເຖິງ ທັງນີ້ກໍ່ເພື່ອສົ່ງເສີມຊີວິດການເປັນຢູ່ທີ່ດີ ແລະ ປັບປຸງຄຸນະພາບຊີວິດຂອງຊຸມຊົນທ້ອງຖິ່ນຢ່າງຮອບດ້ານ ໃຫ້ເຂົາເຈົ້າມີນ້ຳກິນນ້ຳໃຊ້ຕາມຫຼັກສຸຂະອະນາໄມ.

ໃນໂອກາດດັ່ງກ່າວ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML ໄດ້ກ່າວບາງຕອນວ່າ: ຈຸດປະສົງໂຄງການດັ່ງກ່າວ ແມ່ນເພື່ອເຮັດໃຫ້ຊຸມຊົນໃນບ້ານເມືອງຫຼວງ ໄດ້ເຂົ້າເຖິງແຫຼ່ງນ້ຳສະອາດ, ຖືກຕ້ອງຕາມຫຼັກສຸຂະພິບານ, ມີຄວາມສະດວກສະບາຍ, ນຳໃຊ້ໄດ້ຢ່າງທົ່ວເຖິງ, ມີສຸຂະພາບທີ່ດີ ແລະ ມີຊີວິດການເປັນຢູ່ທີ່ດີຂຶ້ນກວ່າເກົ່າ. LXML ມີຄວາມຫວັງຢ່າງຍິ່ງວ່າ ອຳນາດການປົກຄອງ ແລະ ພໍ່ແມ່ປະຊົນທີ່ກ່ຽວຂ້ອງ ຈະໄດ້ພ້ອມກັນຄຸ້ມຄອງ, ປົກປັກຮັກສາ ໃຫ້ມີນ້ຳກິນ, ນ້ຳໃຊ້ທີ່ພຽງພຊ ແລະ ຍືນຍົງຄົງຢູ່ກັບຊຸມຊົນຕະຫຼອດໄປ.

ສຳລັບໂຄງການກໍ່ສ້າງດັ່ງກ່າວນີ້ ປະກອບດ້ວຍອຸປະກອນທີ່ສຳຄັນ ຄື: ຖັງເກັບນ້ຳສະອາດ ທີ່ເຮັດດ້ວຍເບຕົງເສີມເຫຼັກ, ມີຂະໜາດກວ້າງ 4 ແມັດ, ຍາວ 7 ແມັດ, ສູງ 14,6 ແມັດ, ຊຶ່ງໄດ້ແບ່ງເປັນ 3 ຊັ້ນ ທີ່ສາມາດບັນຈຸນ້ຳໄດ້ 45.000 ລິດ, ສາມາດຜະລິດນ້ຳສະອາດໄດ້ເຖິງ 90.000 ລິດຕໍ່ວັນ ນອກນີ້, ຍັງມີຈັກສູບນ້ຳ ແລະ ຕໍ່ທໍ່ນ້ຳເຂົ້າຫາແຕ່ລະຄົວເຮືອນ ແລະ ໂຮງຮຽນ ໃຫ້ພໍ່ແມ່ປະຊາຊົນໄດ້ຊົມໃຊ້ຢ່າງພຽງພໍ ໂດຍແມ່ນທຶນຂອງບໍລິສັດທັງໝົດ ຊຶ່ງຮັບເໝົາກໍ່ສ້າງໂດຍບໍລິສັດ ວິລະບູລີ ພັດທະນາກໍ່ສ້າງຈຳກັດຜູ້ດຽວ (VDC) ມູນຄ່າ 110.965 ໂດລາສະຫະລັດ.



ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງ ວິລະບູລີ ກໍ່ໄດ້ສະແດງຄວາມຂອບໃຈ ມາຍັງບໍລິສັດລ້ານຊ້າງ ມິເນໂຣນສ໌ ຈຳກັດ, ທີ່ເຫັນເຖິງຄວາມສຳຄັນຂອງວຽກງານນ້ຳສະອາດ ທີ່ສະໜອງໃຫ້ແກ່ຊຸມຊົນບ້ານເມືອງຫຼວງ ໃນຄັ້ງນີ້. ພ້ອມນີ້ ທ່ານກໍ່ຍັງໄດ້ຮຽກຮ້ອງມາຍັງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊົນພາຍໃນບ້ານເມືອງຫຼວງ ຈົ່ງໄດ້ພ້ອມກັນປົກປັກຮັກສາ, ຄຸ້ມຄອງ, ນຳໃຊ້ໃຫ້ຍືນຍົງຍາວນານ ແລະ ເກີດຜົນປະໂຫຍດສູງສຸດ.



# LXML ມອບເສັ້ນທາງປູຢາງໃຫ້ແກ່ຊຸມຊົນບ້ານໂນນສົມບູນ ເມືອງ ວິລະບູລີ

ເມື່ອວັນທີ່ 18 ກໍລະກົດ 2024, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ຈັດພິທີມອບ-ຮັບ ໂຄງການເສັ້ນທາງ ປູຢາງ 2 ຊັ້ນ ໃຫ້ແກ່ປະຊາຊົນຊາວບ້ານໂນນສົມບູນ, ໂດຍພາຍໃຕ້ການເປັນປະທານຮ່ວມ ຂອງ ທ່ານ ວາລີຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ ແລະ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML, ເຂົ້າຮ່ວມໃນພິທີມີ ທ່ານ ວັນນີວົງ ຈັນທະລາສີ, ຫົວໜ້າ ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງວິລະບູລີ, ອຳນາດການປົກຄອງເມືອງວິລະບູລີ, ບໍລິສັດຜູ້ຮັບເໝົາ, ພ້ອມດ້ວຍອຳນາດການປົກຄອງບ້ານ ແລະ ປະຊາຊົນຊາວບ້ານໂນນສົມບູນ, ບັນດາພະນັກງານວິຊາການຈາກ LXML.

ໂຄງການກໍ່ສ້າງທາງປູຢາງ 02 ຊັ້ນ ເຂົ້າບ້ານ ໂນນສົມບູນ ແມ່ນໄດ້ຮັບທຶນ ຈາກກອງທຶນພັດທະນາທ້ອງຖິ່ນ ຂອງບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (Community Trust Fund). ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນດັ່ງກ່າວແມ່ນເລີ່ມແຕ່ທາງເລກທີ 6305 (28A) ຫາຂົວຫ້ວຍຄຽງ ເຊິ່ງມີຄວາມຍາວ 620 ແມັດ, ກວ້າງ 5 ແມັດ, ລວມມູນຄ່າ US$52.855. ພາຍຫຼັງ ການກໍ່ສ້າງເສັ້ນທາງດັ່ງກ່າວສຳເລັດ ໄດ້ສ້າງສິ່ງເອື້ອອຳນວຍ ຄວາມສະດວກຫຼາຍຢ່າງໃຫ້ແກ່ ຊາວບ້ານໂນນສົມບູນ ກໍ່ຄືຊາວເມືອງ ວິລະບູລີ ສາມາດໄປມາຫາສູ່ ແລະ ຈະລາຈອນສິນຄ້າເຂົ້າເຖິງຕະຫຼາດ ໄດ້ສະດວກສະບາຍຫຼາຍຂຶ້ນ.




ນັບຕັ້ງແຕ່ບໍ່ຄຳ-ທອງ ເຊໂປນ ເລີ່ມດຳເນີນງານມາແຕ່ປີ 2003 ບໍລິສັດ ໄດ້ສະໜອງທຶນໃສ່ກອງທຶນພັດທະນາທ້ອງຖິ່ນ ຫຼາຍກວ່າ US$14 ລ້ານ, ເຊິ່ງໄດ້ສ້າງຜົນປະໂຫຍດຫຼວງຫຼາຍ ໃຫ້ແກ່ຊຸມຊົນທ້ອງຖິ່ນ ທີ່ດຳລົງຊີວິດຢູ່ອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ. ການສະໜອງທຶນ ໄດ້ເພີ່ມຂຶ້ນທຸກໆ ປີຕາມລຳດັບ ຈາກ US$96,000 ຕໍ່ປີ ຂຶ້ນເປັນ US$750,000 ຕໍ່ປີ ແລະ ຈະຍັງສືບຕໍ່ສະໜອງທຶນດັ່ງກ່າວ ຈົນເຖິງໄລຍະສຸດທ້າຍ ຂອງການຂຸດຄົ້ນ ຫຼື ປິດບໍ່, ທຶນດັ່ງກ່າວນີ້ ໄດ້ສຸມໃສ່ 3 ເສົາຄ້ຳ ທີ່ສຳຄັນ ເຊັ່ນດ້ານສາທາລະນະສຸກ, ການສຶກສາ, ດ້ານກະສິກຳ ແລະ ສະໜອງສິ່ງອຳນວຍຄວາມສະດວກ ທາງສາທາລະນະ, ເຊິ່ງລວມມີເສັ້ນທາງ, ການຂະຫຍາຍຕາຂ່າຍ ພະລັງງານໄຟຟ້າ ໃຫ້ເຂົ້າເຖິງພື້ນທີ່ຫ່າງໄກຊອກຫຼີກ.

ນອກຈາກ ກອງທຶນພັດທະນາທ້ອງຖິ່ນແລ້ວ, LXML ຍັງໄດ້ສະໜອງທຶນ ໃຫ້ແກ່ໂຄງການຊ່ວຍເຫຼືອກຸ່ມ ຜູ້ດ້ອຍໂອກາດ (FADG) ໂດຍນຳໃຊ້ວິທີການການພັດທະນາ ແບບມີສ່ວນຮ່ວມຈາກຜູ້ໄດ້ຮັບຜົນປະໂຫຍດ ໂດຍຜ່ານການເລືອກເຟັ້ນ ເອົາຄອບຄົວທີ່ດຸໝັ່ນ, ມີຄວາມພ້ອມທາງດ້ານແຮງງານ ໂດຍຜ່ານການຕັດສິນໃຈຂອງຄະນະ ຄຸ້ມຄອງກອງທຶນເປັນຜູ້ອະນຸມັດ. ມາຮອດປະຈຸບັນ LXML ໄດ້ ສະໜອງທຶນໃຫ້ແກ່ກອງທຶນດັ່ງກ່າວ ຫຼາຍ US$3,4 ລ້ານ ນັບຕັ້ງແຕ່ປີ 2010 ຮອດປັດຈຸບັນ.

ການສະໜັບສະໜູນຂອງ LXML ສະແດງໃຫ້ເຫັນ ເຖິງຄວາມຕັ້ງໃຈໃນການລົງທຶນ ທີ່ສຳຄັນເຂົ້າໃນໂຄງສ້າງພື້ນຖານ ການພັດທະນາຊີວິດການເປັນຢູ່ ຂອງຊຸມຊົນບ້ານອ້ອມຂ້າງ. ພວກເຮົາຍັງຄົງມຸ່ງໝັ້ນທີ່ຈະຊຸກຍູ້ ການປ່ຽນແປງໄປໃນທິດທາງການພັດທະນາທີ່ດີ ແລະ ຍັງຈະສືບຕໍ່ ສະໜອງການແກ້ໄຂພື້ນຖານໂຄງລ່າງແບບຍືນຍົງ ໃຫ້ແກ່ຊຸມຊົນໃນພື້ນທີ່ ທີ່ພວກເຮົາດຳເນີນໂຄງການຢູ່.






# LXML ຊ່ວຍເງິນອຸດໜູນໃຫ້ແກ່ຄູອາສາສະໝັກ ຂອງເມືອງວິລະບູລີ, ແຂວງສະຫວັນນະເຂດ

ເມື່ອວັນທີ 2 ສິງຫາ 2024 ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ເຂົ້າຮ່ວມພິທີມອບ-ຮັບ ເງິນອຸດໜູນເບ້ຍລ້ຽງ ໃຫ້ຄູອາສາສະໝັກໃນທົ່ວເມືອງວິລະບູລີ, ແຂວງສະຫວັນນະເຂດ ປະຈຳສົກປີ 2022-2023 ພິທີດັ່ງກ່າວໄດ້ຈັດຂຶ້ນຢູ່ທີ່ ສະໂມສອນຫ້ອງການສຶກສາທິການ ແລະ ກິລາເມືອງວິລະບູລີ. ເຂົ້າຮ່ວມຕາງໜ້າຈາກບໍລິສັດ LXML ໂດຍທ່ານ ນາມຊະນະ ໂພທິພັນ, ຫົວໜ້າສາຍງານ ພົວພັນຊຸມຊົນ, ທ່ານ ແກ້ວອຸດອນ ວົງສັກດາ ຮອງຫົວໜ້າຫ້ອງການ ສຶກສາທິການ ແລະ ກິລາເມືອງ, ມີຄະນະຫ້ອງການ, ໜ່ວຍງານກ່ຽວຂ້ອງ, ແຂກຖືກເຊີນ ແລະ ບັນດາຄູອາສາສະໝັກທົ່ວເມືອງເຂົ້າຮ່ວມ.

ໃນໂອກາດເປີດພິທີ ທ່ານ ແກ້ວອຸດອນ ວົງສັກດາ ກໍ່ໄດ້ຂຶ້ນກ່າວລາຍງານວ່າ: ເມືອງວິລະບູລີ ກໍ່ເປັນເມືອງໜຶ່ງ ທີ່ຍັງຂາດບຸກຄະລາກອນຄູ ຄືກັບເມືອງອື່ນໆທີ່ຂຶ້ນກັບ ແຂວງສະຫວັນນະເຂດ, ເລີ່ມແຕ່ສົກຮຽນ 2014-2015 ຫາ ສົກຮຽນ 2018-2019 ທາງສຶກສາເມືອງ ແມ່ນໄດ້ຮັບເອົາຄູອາສາສະໝັກ ເຂົ້າສິດສອນຕາມໂຮງຮຽນຕ່າງໆ ທີ່ຂາດຄູ; ມາຮອດສົກຮຽນ 2022-2023 ທົ່ວເມືອງວິລະບູລີ ມີຄູອາສາທັງໝົດ 51 ຄົນ ຍິງ 32 ຄົນ ໃນນັ້ນ ຄູອາສະໝັກເຮັດໜ້າທີ່ສິດສອນໃນຊັ້ນອະນຸບານ ມີຈຳນວນ 14 ຄົນ ຍິງ 14 ຄົນ, ຊັ້ນປະຖົມມີຈຳນວນ 23 ຄົນຍິງ 11 ຄົນ, ມັດທະຍົມຕົ້ນ ຈຳນວນ 06 ຄົນ ຍິງ 02 ຄົນ ແລະ ຊັ້ນມັດທະຍົມສົມບູນ ມີຈຳນວນ 08 ຄົນ ຍິງ 05 ຄົນ. ໃນສົກຮຽນ 2022-2023 ເມືອງ ວິລະບູລີ ແມ່ນເປັນປີທີ 3 ແລ້ວ ທີ່ໄດ້ຮັບທຶນສະໜັບສະໜູນເບ້ຍລ້ຽງໃຫ້ຄູອາສາໝັກ ໂດຍແມ່ນບໍລິສັດລ້ານຊ້າງ ມິເນໂຣນສ໌ ຈຳກັດ ເປັນຜູ້ໃຫ້ທຶນດັ່ງກ່າວເປັນເງິນຈຳນວນ 13.000 USD (ສິບສາມພັນໂດລາ ສະຫະລັດ) ໂດຍຜ່ານ ກອງທຶນພັດທະນາທ້ອງຖິ່ນ (TF).

LXML ຍັງຄົງອຸທິດຕົນເພື່ອສະໜັບສະໜູນ ຂະແໜງການສຶກສາ ແລະ ຮັບຮູ້ບົດບາດອັນສຳຄັນຂອງຄູ-ອາຈານ ໃນການສ້າງອະນາຄົດທີ່ດີ ໃຫ້ແກ່ຊຸມຊົນທ້ອງຖິ່ນ. ໂດຍສຸມໃສ່ການລົງທຶນໃຫ້ກັບຄູອາສາສະໝັກ, LXML ມີຄວາມມຸ່ງຫວັງ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານການສຶກສາຂອງທ້ອງຖິ່ນ, ປັບປຸງຜົນໄດ້ຮັບ ທາງການສຶກສາ ແລະ ສົ່ງເສີມສະພາບແວດລ້ອມການຮຽນຮູ້ ທີ່ຍືນຍົງສຳລັບນັກຮຽນທຸກຄົນ ໃນເມືອງ ວິລະບູລີ.






# LXML ເຊໂປນ ປະກອບສ່ວນຊຸກຍູ້ງານມະຫາກຳ ຜູ້ໄທຄືນຖິ່ນ, ເມືອງວິລະບູລີ, ແຂວງສະຫວັນນະເຂດ

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ປະກອບສ່ວນເງິນຈຳນວນ 50,000,000 ກີບ (US$ 2,289.37) ເພື່ອຊຸກຍູ້ເມືອງວິລະບູລີ ຈັດງານມະຫາກຳຜູ້ໄທຄືນຖິ່ນ. ນອກຈາກນີ້, ບໍລິສັດຍັງໄດ້ສະໜອງອຸປະກອນອື່ນໆ ທີ່ກ່ຽວຂ້ອງ ເພື່ອສະໜັບສະໜູນໃນງານ ເປັນເວລາ 3 ວັນ, ເລີ່ມແຕ່ວັນທີ 11-13 ທັນວາ 2024 ລວມເປັນມູນຄ່າທັງໝົດ 114,500,000 ກີບ (US$ 5,242.66). ພິທີດັ່ງກ່າວໄດ້ຈັດຂຶ້ນ ທີ່ສະໜາມກິລາໃຫຍ່ລາດຊະວົງ ເມືອງວິລະບູລີ ແຂວງສະຫວັນນະເຂດ.

ການສະໜັບສະໜູນ ງານມະຫາກຳຜູ້ໄທຄືນຖິ່ນ ຖືເປັນຂີດໝາຍທີ່ສຳຄັນອັນໜຶ່ງ ທີ່ເປັນນິມິດໝາຍຂອງການດຳເນີນງານ ໂຄງການບໍ່ຄຳ-ທອງ ທີ່ຢູ່ກັບຊຸມຊົນ ແລະທ້ອງຖິ່ນແຫ່ງນີ້, ຊຶ່ງມັນສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນ ຂອງ LXML ໃນການສະໜັບສະໜູນກິດຈະກຳຂອງທ້ອງຖິ່ນ, ການຊຸກຍູ້ສົ່ງເສີມວັດທະນະທຳ ອັນດີງາມຂອງເຜົ່າຊົນ ໃນທ້ອງຖິ່ນຢ່າງຫ້າວຫັນ ຕະຫຼອດເຖິງການພັດທະນາພື້ນຖານໂຄງລ່າງ ແລະສ້າງຄວາມຜາສຸກ ໃຫ້ແກ່ຊຸມຊົນໃນພາກພື້ນ. ນີ້ຖືເປັນບາດກ້າວອັນຕັ້ງໜ້າ ໃນການປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງສະຫວັນນະເຂດ.

LXML ມີສາຍພົວພັນຮ່ວມມືອັນດີງາມ ກັບເມືອງວິລະບູລີ ແລະ ແຂວງສະຫວັນນະເຂດມາເປັນເວລາຍາວນານ ເຖິງສອງທົດສະວັດ, ບໍລິສັດ ມີຄວາມເອົາໃຈໃສ່ ເບິ່ງແຍງສິ່ງແວດລ້ອມ ແລະ ຄຸນນະພາບຊີວິດການເປັນຢູ່ທີ່ດີຂອງຊຸມຊົນທ້ອງຖິ່ນຕະຫຼອດມາ. ບໍລິສັດໄດ້ ເອົາໃຈໃສ່ຕໍ່ບັນຫາສຸຂະພາບ ແລະ ຖືເອົາການຄຸ້ມຄອງສິ່ງແວດລ້ອມ ທີ່ດີເປັນບຸລິມະສິດຕົ້ນຕໍ. ຕະຫຼອດໄລຍະສອງທົດສະວັດທີ່ຜ່ານມາ, ບໍລິສັດ ໄດ້ເຮັດວຽກ ຢ່າງມີຄວາມຮັບຜິດຊອບ ເພື່ອປັບປຸງຊີວິດການເປັນຢູ່ ຂອງຊຸມຊົນທ້ອງຖິ່ນ ໃຫ້ດີຂຶ້ນເທື່ອລະກ້າວ, ສ້າງຄວາມເຂັ້ມແຂງ ໃຫ້ແກ່ຊາວບ້ານ ເພື່ອໃຫ້ເຂົາເຈົ້າໄດ້ບັນລຸບູລິມະສິດ ໃນການພັດທະນາເສດຖະກິດຄອບຄົວຂອງຕົນ ແລະ ສະໜອງ ຜົນປະໂຫຍດຫຼາຍຢ່າງໃຫ້ແກ່ບັນດາຊຸມຊົນ ທີ່ອາໃສຢູ່ໃນບໍລິເວນອ້ອມຮອບ ໂຄງການ ບໍ່ຄຳ-ທອງ ເຊໂປນ.









# LXML ເຊໂປນ ມອບອຸປະກອນກໍ່ສ້າງຫ້ອງນ້ຳໃຫ້ຊຸມຊົນອ້ອມຂ້າງໂຄງການບໍ່ຄຳ-ທອງ ເຊໂປນ

ເມື່ອບໍ່ດົນມານີ້ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ບໍລິຈາກ ອຸປະກອນກໍ່ສ້າງຫ້ອງນ້ຳ ໃຫ້ບັນດາບ້ານອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ. ຈຸດປະສົງແມ່ນເພື່ອແນ່ໃສ່ປັບປຸງ ດ້ານສຸຂາພິບານ ແລະ ສົ່ງເສີມການປະຕິບັດດ້ານສຸຂະພາບທີ່ດີ ໃນບັນດາຊຸມຊົນທ້ອງຖິ່ນ ຢູ່ອ້ອມຂ້າງຂອງໂຄງການ. ເງິນຊ່ວຍເຫຼືອດັ່ງກ່າວມີມູນຄ່າທັງໝົດ 124,440,000 ກີບ ຫຼື 6,037,75 ໂດລາ ສະຫະລັດ ຊຶ່ງໄດ້ສ້າງຜົນປະໂຫຍດ ໃຫ້ແກ່ປະຊາຊົນທັງໝົດ 85 ຄອບຄົວ ໃນທົ່ວ 5 ບ້ານ. ໂດຍອີງຕາມແຜນພັດທະນາ ຂອງໂຄງການບໍ່ຄຳທອງ-ເຊໂປນ ຢູ່ບັນດາບ້ານອ້ອມຂ້າງ ເພື່ອໃຫ້ທຸກໆຄອບຄົວໃນຈຳນວນ 05 ບ້ານໃຫ້ມີວິດຖ່າຍທັງໝົດ. ອຸປະກອນກໍ່ສ້າງຫ້ອງນ້ຳປະກອບມີສິ່ງຂອງທີ່ຈຳເປັນ ເຊັ່ນ: ທໍ່ P100, ຝາປິດແບບໃສ່ຫົວວິດກັບ, ຫົວວິດ, ທໍ່ລະບາຍອາກາດ, ຕະປູກຸບ, ສັງກະສີ 8 ຟຸກ, ຊີມັງຂຽວ ແລະ ແຮ່-ຊາຍ. ຊຶ່ງເປັນເຄື່ອງມື ທີ່ມີຄວາມຈຳເປັນສຳລັບການກໍ່ສ້າງຫ້ອງນ້ຳສະອາດ ແລະປອດໄພພາຍໃນຊຸມຊົນ.

ໃນບັນດາ 85 ຄອບຄົວ ຂອງ 5 ບ້ານ ທີ່ໄດ້ຮັບເຄື່ອງຊ່ວຍເຫຼືອດັ່ງກ່າວປະກອບມີ:

- ບ້ານ ປະດົງ ມີ 11 ຄອບຄົວ ທີ່ໄດ້ຮັບເຄື່ອງຊ່ວຍເຫຼືອ ລວມມູນຄ່າທັງໝົດ 16,010,000 ກີບ
- ບ້ານ ນ້ຳຄີບ ມີ 4 ຄອບຄົວ ທີ່ໄດ້ຮັບເຄື່ອງຊ່ວຍເຫຼືອ ລວມມູນຄ່າທັງໝົດ 6,400,000 ກີບ
- ບ້ານ ວັງຍາງ ມີ 1 ຄອບຄົວ ທີ່ໄດ້ຮັບເຄື່ອງຊ່ວຍເຫຼືອ ລວມມູນຄ່າທັງໝົດ 1,800,000 ກີບ
- ບ້ານ ແກ້ງເກົາ ມີ 18 ຄອບຄົວ ທີ່ໄດ້ຮັບເຄື່ອງຊ່ວຍເຫຼືອ ລວມມູນຄ່າທັງໝົດ 21,230,000 ກີບ ແລະ
- ບ້ານ ນາກະຊິນ ມີ 51 ຄອບຄົວ ທີ່ໄດ້ຮັບເຄື່ອງຊ່ວຍເຫຼືອ ລວມມູນຄ່າທັງໝົດ 79,400,000 ກີບ.

ວຽກງານລົງຊຸກຍູ້ຊ່ວຍເຫຼືອ ເພື່ອປັບປຸງຄຸນນະພາບຊີວິດ ແລະ ໂຄງສ້າງພື້ນຖານ ຂອງຊຸມຊົນທ້ອງຖິ່ນແມ່ນເປັນເປົ້າໝາຍໜຶ່ງ ທີ່ນອນຢູ່ໃນແຜນພັດທະນາທຸລະກິດຂອງ ບໍລິສັດ LXML ທີ່ຍາມໃດກໍ່ໃຫ້ຄວາມຫ່ວງໃຍ ແລະ ມີຄວາມມຸ່ງໝັ້ນ ໃນການສະໜັບສະໜູນການພັດທະນາ ຊຸມຊົນທ້ອງຖິ່ນທີ່ຢູ່ອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນຢ່າງມີຄວາມຮັບຜິດຊອບ.

ການບໍລິຈາກ ອຸປະກອນກໍ່ສ້າງຫ້ອງນ້ຳຂອງ ບໍລິສັດ ໃນຄັ້ງນີ້ ເປັນການລົງທຶນທີ່ສຳຄັນໃນພື້ນຖານໂຄງລ່າງ ດ້ານສຸຂະພາບ ແລະ ສຸຂາພິບານຂອງຊຸມຊົນບ້ານອ້ອມຂ້າງ. ບໍລິສັດຍັງຄົງມຸ່ງໝັ້ນທີ່ຈະຊຸກຍູ້ການປ່ຽນແປງ ທີ່ດີໄປໃນທິດທາງບວກ ແລະ ສ້າງຄວາມຍືນຍົງ ພາຍໃນພາກພື້ນໃຫ້ດີຂຶ້ນເລື້ອຍໆ.





ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ປະກອບສ່ວນ 10,000 ໂດລາສະຫະລັດ ໃຫ້ແກ່ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຊ່ວຍບັນເທົາຜົນກະທົບຈາກໄພນ້ຳຖ້ວມ.

ມອບໂດຍ ທ່ານ ສະໝານ ອະເນກາຜູ້ອຳນວຍການໃຫຍ່ຂອງ ບໍລິສັດ LXML ຮັບໂດຍ ທ່ານ ໂພໄຊ ໄຊຍະສອນ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່. ການປະກອບສ່ວນນີ້ຊີ້ໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ LXML ໃນການຊຸກຍູ້ຊ່ວຍເຫຼືອຊຸມຊົນ ແລະ ຊ່ວຍສະໜອງຄວາມຕ້ອງການອັນຮີບດ່ວນໃນສະຖານະການທີ່ເກີດວິກິດ.



ເນື່ອງໃນໂອກາດການເຂົ້າຢ້ຽມຄຳນັບ ແລະ ລາຍງານຄວາມຄືບໜ້າ ແລະ ບັນຫາທີ່ຄ້າງຄາ ຕໍ່ການນຳຂັ້ນສູງຂອງກະຊວງພະລັງງານ ແລະ ບໍ່ແຮ່ ເມື່ອບໍ່ດົນມານີ້, ທາງບໍລິສັດ LXML ໄດ້ໃຫ້ການປະກອບສ່ວນໃຫ້ແກ່ກະຊວງພະລັງງານ ແລະ ບໍ່ແຮ່. ຈຳນວນ 108,000,000 ກີບ (4.894 ໂດລາ ສະຫະລັດ) ເພື່ອປະກອບສ່ວນຊຸກຍູ້ ໃຫ່ແກ່ກອງປະຊຸມບັນດາທ່ານລັດຖະມົນຕີ ພະລັງງານ ແລະ ບໍ່ແຮ່ ອາຊຽນ ທັງເປັນການຮັດແໜ້ນສາຍພົວພັນການຮ່ວມມືລະຫວ່າງບໍລິສັດ LXML ກັບພາກລັດ.




ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ປະກອບສ່ວນໃຫ້ແກ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI) ຈຳນວນ 5,000 ໂດລາສະຫະລັດ (110,575,000 ກີບ) ເພື່ອສະໜັບສະໜູນວຽກງານການເປັນເຈົ້າພາບກອງປະຊຸມສຸດຍອດທຸລະກິດ ແລະ ການລົງທຶນອາຊຽນທີ່ຈະມາເຖິງໃນໄວໆນີ້.

ມອບໂດຍ ທ່ານ ສະໝານ ອະເນກາຜູ້ອຳນວຍການໃຫຍ່ຂອງ ບໍລິສັດ LXML ຮັບໂດຍ ທ່ານ ດາວວອນ ພະຈັນທະວົງ, ຮອງປະທານ LNCCI. ການປະກອບສ່ວນນີ້ຊີ້ໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ LXML ໃນການຊຸກຍູ້ ການຂະຫຍາຍຕົວທາງເສດຖະກິດຂອງປະເທດ ແລະ ການຮ່ວມມືພາຍໃນພາກພື້ນອາຊຽນ.






ໃນວັນທີ 25 ກໍລະກົດ 2024 ຢູ່ທີ່ ຫ້ອງການສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI) ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ໄດ້ໃຫ້ການສະໜັບສະໜູນເງິນຈຳນວນ 100,000,000 ກີບ ໃນນາມສະມາຊິກຜູ້ຊົງຄຸນວຸດທິ VVIP ຂອງສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI) ເພື່ອສ້າງຄວາມເຂັ້ມແຂງໃຫ້ LNCCI ແລະ ຊ່ວຍສົ່ງເສີມພັດທະນາ ຂີດຄວາມສາມາດຂອງພາກທຸລະກິດໃນ ສປປ ລາວ.

ຕາງໜ້າຈາກບໍລິສັດ ມອບໂດຍ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ແລະ ຮັບໂດຍທ່ານ ດາວວອນ ພະຈັນທະວົງ, ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.



ໃນຕອນເຊົ້າຂອງວັນທີ 15 ສິງຫາ 2024 ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ຮ່ວມກັບອຳນາດການປົກຄອງເມືອງວິລະບູລີ ໄດ້ຈັດພິທີ ມອບ-ຮັບ ແລະ ປູກຕົ້ນດອກພະຍາເສືອໂຄ່ງ ຢູ່ທີ່ສວນອຸທິຍານວັງແຫ່ງຄຳ ເມືອງວິລະບູລີ ແຂວງສະຫວັນນະເຂດ ເຊິ່ງເປັນສ່ວນອຸທິຍານ ທີ່ກຳລັງສ້າງຂຶ້ນໃໝ່ ຕັ້ງຢູ່ໃຈກາງເມືອງວິລະບູລີ ການປູກຕົ້ນໄມ້ປະດັບດັ່ງກ່າວແມ່ນເພື່ອແນໃສ່ເຮັດໃຫ້ສະຖານທີ່ດັ່ງກ່າວມີຄວາມສວຍສົດງົດງາມ ເປັນສະຖານທີ່ພັກຜ່ອນຢ່ອນອາລົມ ແລະ ທ່ຽວຊົມຂອງຊາວເມືອງວິລະບູລີ ກໍ່ຄືນັກທ່ອງທ່ຽວຕ່າງໆ ທາງພາຍໃນ ແລະ ຕ່າງປະເທດ ແລະ ນອກນີ້, ຈະຍັງສາມາດດຶງດູດນັກທ່ອງທ່ຽວ ໃຫ້ເຂົ້າມາ ທ່ຽວຊົມພັກຜ່ອນທີ່ເມືອງວິລະບູລີ ຫຼາຍຂຶ້ນໃນອະນາຄົດ.



ໃນວັນທີ 17 ກໍລະກົດ 2024 ທີ່ຫ້ອງປະຊຸມ ຫໍວັດທະນະທຳ ເມືອງໄກສອນພົມວິຫານ ໄດ້ມີພິທີມອບໃບຍ້ອງຍໍ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດທີ່ມີຜົນງານດີເດັ່ນ ໃນການປະຕິບັດການມອບພັນທະອາກອນຕ່າງໆໃຫ້ແກ່ແຂວງສະຫວັນນະເຂດ ປະຈຳສົກປີ 2023 ໃນນັ້ນບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ກໍ່ເປັນໜຶ່ງໃນບັນດາບໍລິສັດທີ່ມີຕົວເລກການມອບອາກອນທີ່ເປັນອັນດັບຕົ້ນໆໃຫ້ແກ່ແຂວງສະຫວັນນະເຂດ ໂດຍປະຕິບັດການມອບໄດ້ຖືກຕ້ອງ ແລະ ຕາມກຳນົດເວລາ, ເຊິ່ງໃນສົກປີ 2023 ທີ່ຜ່ານມາ LXML ກໍ່ໄດ້ມອບພັນທະອາກອນຕ່າງໆໃຫ້ແກ່ແຂວງສະຫວັນນະເຂດ ລວມທັງໝົດ US$83 ລ້ານ.




# ຊົມເຊີຍຂະບວນການສ້າງກິດຈະກຳ ວັນສິ່ງແວດລ້ອມໂລກ ຢ່າງຟົດຟື້ນ ທີ່ບໍ່ຄຳ-ທອງ ເຊໂປນ

ໃນມື້ວັນທີ 5 ມິຖຸນາ 2024, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໂດຍການຮ່ວມມືກັບອຳນາດການປົກຄອງ ເມືອງວິລະບູລີ ແລະ ຊຸມຊົນທ້ອງຖິ່ນ ໄດ້ສ້າງຂະບວນການປູກຕົ້ນໄມ້ ໃນວັນສິ່ງແວດລ້ອມໂລກ (WED) ເພື່ອເປັນການຟື້ນຟູ ແລະ ເສີມສ້າງຄວາມອຸດົມສົມບູນ ທາງທຳມະຊາດ ຢູ່ເຂດອະນຸລັກຫົວຝາຍນ້ຳນາເຕົ້ ທີ່ສອດຄ່ອງຕາມການຈັດຕັ້ງປະຕິບັດ ຂອງສາກົນໃນການສົ່ງເສີມປົກປັກຮັກສາ ແລະ ການອະນຸລັກສິ່ງແວດລ້ອມ ຊຶ່ງຄຳຂວັນ ເນື່ອງໃນໂອກາດ ວັນສິ່ງແວດລ້ອມໂລກ ໃນປີນີ້ແມ່ນ "ຮ່ວມກັນຢຸດທຳລາຍປ່າໄມ້, ຈູດປ່າແບບຊະຊາຍ ເພື່ອຟື້ນຟູດິນ, ຕ້ານໄພແຫ້ງແລ້ງ ແລະ ນ້ຳຖ້ວມ" ເຂດອານຸລັກ ຫົວຝາຍນາເຕົ້ ຕັ້ງຢູ່ຫ່າງຈາກ ສະໜາມ ບໍ່ຄຳ-ທອງ ເຊໂປນ ປະມານ 50 ກິໂລແມັດ ສະຖານທີ່ດັ່ງກ່າວມີຄວາມສຳຄັນທາງດ້ານສັງຄົມ ແລະ ນິເວດວິທະຍາ ໃຫ້ແກ່ອຳນາດການປົກຄອງ ເມືອງວິລະບູລີ ແລະ ຊຸມຊົນທ້ອງຖິ່ນອ້ອມຂ້າງ, ພື້ນທີ່ດັ່ງກ່າວແມ່ນສະຖານທີ່ທ່ອງທ່ຽວ ທີ່ສຳຄັນ ແຕ່ເນື່ອງຈາກໄດ້ຮັບການເສື່ອມໂຊມລົງ ຍ້ອນບາງກິດຈະກຳອຸດສາຫະກຳທີ່ຜ່ານມາ ແລະ ເປັນພື້ນທີ່ສ່ຽງໄພ ຈາກການຂຸດຄົ້ນໃນອະນາຄົດ. ເພື່ອເຫັນເຖິງຄວາມສຳຄັນດັ່ງກ່າວ, ພະແນກສິ່ງແວດລ້ອມຂອງ ບໍລິສັດ LXML ຈຶ່ງໄດ້ຂຶ້ນແຜນ ສຳລັບການຟື້ນຟູລະບົບນິເວດ ຂອງສະຖານທີ່ແຫ່ງນີ້ ໂດຍການບໍລິຈາກເບ້ຍໄມ້ພື້ນເມືອງ ເພື່ອແນ່ໃສ່ປູກຕົ້ນໄມ້ໃຫ້ເປັນປ່າ, ອະນຸລັກ ແລະ ຟື້ນຟູຊີວະນາໆພັນຂອງພື້ນທີ່ດັ່ງກ່າວ.

ເປັນກຽດເຂົ້າຮ່ວມ ເປັນປະທານຂອງ ທ່ານ ວາລີຍະ ສີຈັນທອງທິບ ເຈົ້າເມືອງວິລະບູລີ ແລະ ທ່ານ ສະໝານ ອະເນກາ ຜູ້ອຳນວຍການໃຫຍ່ ບໍລິສັດ LXML, ທ່ານ ຮອງເຈົ້າເມືອງ, ຮອງຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງສະຫວັນນະເຂດ, ຜູ້ຕາງໜ້າຈາກຄະນະນຳບໍລິສັດ, ທ່ານ ຄາວ ຣຽກ, ຜູ້ຈັດການ ດ້ານຄວາມປອດໄພ ແລະ ສິ່ງແວດລ້ອມ, ທ່ານ ເຊັ່ນ ລັງດອນ, ຫົວໜ້າອາວຸໂສໜ່ວຍງານສິ່ງແວດລ້ອມ, ມີອຳນາດການປົກຄອງເມືອງ, ພະນັກງານຈາກພາກລັດຖະບານ, ພໍ່ແມ່ປະຊາຊົນ ຈາກຊຸມຊົນທ້ອງຖິ່ນ, ພະນັກງານສິ່ງແວດລ້ອມ ເມືອງວິລະບູລີ ແລະ ພະນັກງານວິຊາການ ຂອງບໍລິສັດເຂົ້າຮ່ວມໃນການປູກຕົ້ນໄມ້.

ໃນໂອກາດນີ້ ທ່ານ ວາລີຍະ ສີຈັນທອງທິບ ເຈົ້າເມືອງວິລະບູລີ ໄດ້ສະແດງຄວາມຂອບໃຈ ຢ່າງຈິງໃຈມາຍັງ ບໍລິສັດ LXML ໂດຍທ່ານໄດ້ກ່າວວ່າ: "ພວກເຮົາຂໍສະແດງຄວາມຂອບໃຈ ຢ່າງເລິກເຊິ່ງຕໍ່ກັບການປະກອບສ່ວນ ອັນສຳຄັນຂອງ LXML ເຂົ້າໃນການຟື້ນຟູສິ່ງແວດລ້ອມ ຂອງຊຸມຊົນຂອງພວກເຮົາ. ການອຸທິດຕົນຂອງບໍລິສັດ ໃນການສະໜັບສະໜູນອະນຸລັກພື້ນທີ່ຫົວຝາຍນ້ຳ ນາເຕົ້ແຫ່ງນີ້ ບໍ່ພຽງແຕ່ເປັນການຊ່ວຍປັບປຸງລະບົບນິເວດ ໃນທ້ອງຖິ່ນເທົ່ານັ້ນ, ແຕ່ຍັງໄດ້ສະແດງເຖິງການເຮັດໜ້າທີ່ ເປັນພົນລະເມືອງທີ່ມີຄວາມຮັບຜິດຊອບ ຕໍ່ອົງກອນ, ຕໍ່ປະເທດຊາດບ້ານເມືອງ ອີກດ້ວຍ."

ການປະກອບສ່ວນທີ່ສຳຄັນ ຂອງ LXML ປະກອບມີ ການສະໜອງເບ້ຍໄມ້, ການປູກເບ້ຍໄມ້ແຂງພື້ນເມືອງ 160 ຕົ້ນ, ການຂຸດຂຸມດິນ, ປ້າຍໂຄສະນາ ແລະ ເສື້ອຢືດວັນສິ່ງແວດລ້ອມໂລກ 2024 ມອບໃຫ້ທຸກຄົນ ທີ່ໄດ້ເຂົ້າຮ່ວມ, ສະໜອງອາຫານ ແລະ ເຄື່ອງດື່ມ ແລະ ນອກນີ້ຍັງໄດ້ສະໜອງໄມ້ພາເລດເພື່ອໃຊ້ ສຳລັບເຮັດຮົ້ວອ້ອມຕົ້ນໄມ້, ກຳລັງແຮງງານຈາກບຸກຄາລະກອນຂອງບໍລິສັດ ເຂົ້າໃນການປູກຕົ້ນໄມ້, ອະນາໄມສະຖານທີ່, ການປູກຈິດສຳນຶກຂອງຊຸມຊົນທ້ອງຖິ່ນ ກ່ຽວກັບການອະນຸລັກປ່າໄມ້ ແລະ ການປະຕິບັດການຄຸ້ມຄອງສິ່ງເສດເຫຼືອ. ທັງໝົດນີ້ ໄດ້ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຢ່າງຕັ້ງໜ້າ ເຂົ້າໃນການຄຸ້ມຄອງສິ່ງແວດລ້ອມ ຄິດເປັນມູນຄ່າທັງໝົດ 6,000 ໂດລາສະຫະລັດ.

ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ບໍລິສັດ LXML ໄດ້ກ່າວ ເຖິງຄວາມສຳຄັນ ໃນໂອກາດດັ່ງກ່າວທີ່ມີເນື້ອໃນບາງຕອນວ່າ: "LXML ມີຄວາມພູມໃຈ ທີ່ໄດ້ຮ່ວມມືກັບການຈັດຕັ້ງເມືອງວິລະບູລີ ໃນວັນສະເຫຼີມສະຫຼອງ ວັນສິ່ງແວດລ້ອມໂລກອັນສຳຄັນນີ້", "ຂ້າພະເຈົ້າເຊື່ອວ່າ ໂດຍການເຮັດວຽກຮ່ວມກັນ, ພວກເຮົາສາມາດຮັບປະກັນອະນາຄົດ ທີ່ເຕັມໄປດ້ວຍຄວາມອຸດົມສົມບູນ ແລະ ຄວາມຍືນຍົງທາງທຳມະຊາດ ໃຫ້ກັບເຂດອະນຸລັກ ຫົວຝາຍນາເຕົ້ ແລະ ຊຸມຊົນທີ່ອາໄສພື້ນທີ່ແຫ່ງນີ້"

ນອກຈາກ ກິດຈະກຳປູກຕົ້ນໄມ້ແລ້ວ ຍັງໄດ້ມີຂະບວນການສ້າງກິດຈະກຳການ ຖາມ-ຕອບ ເພື່ອສົ່ງເສີມການປູກຈິດສຳນຶກ ແລະ ໃຫ້ຄວາມຮູ້ ກ່ຽວກັບການອະນຸລັກສິ່ງແວດລ້ອມທີ່ຍືນຍົງ.

ທີ່ LXML ເຊໂປນ, ພວກເຮົາມຸ່ງໝັ້ນ ທີ່ຈະຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ພະຍາຍາມ ສົ່ງຄືນທີ່ດິນທີ່ຖືກລົບກວນ ໃຫ້ກັບສູ່ສະພາບເດີມທີ່ສາມາດນຳໃຊ້ໄດ້. ບູລິມະສິດຂອງພວກເຮົາ ໃນພື້ນທີ່ນີ້ ລວມມີ, ການປ້ອງກັນຜົນກະທົບຂອງສະພາບແວດລ້ອມ ໃນການດຳເນີນງານ, ການຮ່ວມກັນຟື້ນຟູຢ່າງກ້າວໜ້າ ເຂົ້າໃນແຜນການ ແລະ ການດຳເນີນງານຂອງພວກເຮົາ, ການສົ່ງມອບແນວທາງການປະຕິບັດ ອຸດສາຫະກຳທີ່ດີທີ່ສຸດ ໃນການຟື້ນຟູທີ່ດິນ ແລະ ການປູກພືດເພື່ອທົດແທນ. ນອກນີ້, ພວກເຮົາຍັງໃຫ້ຄວາມສຳຄັນແກ່ການມີສ່ວນຮ່ວມ ຂອງຊຸມຊົນໃນການລິເລີ່ມ ດ້ານການປົກປັກຮັກສາສິ່ງແວດລ້ອມ ຮ່ວມກັບພວກເຮົາ, ພວກເຮົາເຊື່ອສະເໝີວ່າ ການຮ່ວມມືກັບພາກສ່ວນກ່ຽວຂ້ອງ ໃນທ້ອງຖິ່ນແມ່ນມີຄວາມ ສຳຄັນຕໍ່ຄວາມຍືນຍົງດ້ານສິ່ງ ແວດລ້ອມໃນໄລຍະຍາວ.

# ພະນັກງານ LXML ໄດ້ຮັບທຶນການສຶກສາ ຂອງປະເທດອິດສະຕຣາລີ

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ມີຄວາມພາກພູມໃຈ ແລະ ຊົມເຊີຍຜົນສຳເລັດຂອງ ທ່ານ ຈັນສະໄໝ ເວີນແກ້ວ, ໜຶ່ງໃນພະນັກງານທີ່ດີເດັ່ນຂອງບໍລິສັດພວກເຮົາ ທີ່ໄດ້ຮັບທຶນການສຶກສາລະດັບສູງ ຈາກລັດຖະບານປະເທດອິດສະຕຣາລີ ຊຶ່ງ ທ່ານ ຈັນສະໄໝ ປັດຈຸບັນແມ່ນໄປຍົກລະດັບການສຶກສາຂັ້ນປະລິນຍາໂທ ໃນສາຂາວິທະຍາສາດອຸທົກກະສາດນ້ຳໃຕ້ດິນ. ບໍລິສັດພວກເຮົາຍິນດີໃຫ້ການສະໜັບສະໜູນການເດີນທາງຂອງທ່ານຢ່າງພາກພູມໃຈ ແລະ ພວກເຮົາຍັງຈະຮັກສາທ່ານໃຫ້ເປັນພະນັກງານໃນບໍລິສັດຂອງພວກເຮົາຄືເກົ່າ ເຖິງແມ່ນວ່າທ່ານຈະໄປຮຽນຕໍ່ຢູ່ຕ່າງປະເທດແລ້ວກໍ່ຕາມ. ຄວາມສຳເລັດນີ້ຊີ້ໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ LXML ໃນການສະໜັບສະໜູນພະນັກງານທີ່ມີພອນສະຫວັນຂອງພວກເຮົາ ແລະ ກໍ່ຍັງຊີ້ໃຫ້ເຫັນເຖິງຄວາມພາກພູມໃຈຂອງພວກເຮົາ ທີ່ໄດ້ປະກອບສ່ວນເຂົ້າໃນການເດີນທາງໃນການພັດວຽກງານອາຊີບຂອງລາວ.

### *ຄວາມເປັນມາ ແລະ ການເດີນ ທາງໃນສາຍອາຊີບ*

ທ່ານ ຈັນສະໄໝ ເວີນແກ້ວ, ຮັບຜິດຊອບຕຳແໜ່ງ ວິສະວະກອນອາວຸໂສຝ່າຍທໍລະນີສາດ, ທ່ານ ເກີດ ແລະ ເຕີບໃຫຍ່ຢູ່ບ້ານ ນາຍົມ, ເມືອງວິລະບູລີ, ແຂວງສະຫວັນນະເຂດ, ທ່ານ ໄດ້ເອົາໃຈໃສ່ຕໍ່ການສຶກສາ ແລະ ອາຊີບຂອງຕົນ ຢ່າງກະຕືລືລົ້ນ. ພາຍຫຼັງຮຽນຈົບ ຂັ້ນປະຖົມສຶກສາ ຈຶ່ງໄດ້ໄປຮຽນຕໍ່ ຂັ້ນມັດທະຍົມຕອນປາຍ ຢູ່ເມືອງໄກສອນພົມວິຫານ ແລະ ຕໍ່ມາຈຶ່ງໄດ້ເຂົ້າມາສຶກສາທີ່ນະຄອນຫຼວງວຽງຈັນ ເພື່ອສຶກສາຕໍ່ ທີ່ວິທະຍາໄລເຕັກນິກ ສັບພະວິຊາ. ທ່ານຈົບການສຶກສາ ລະດັບຊັ້ນສູງ ສາຂາທໍລະນີສາດໃນປີ 2009 ແລະ ຕໍ່ມາໄດ້ຈົບການສຶກສາປະລິນຍາຕີ ສາຂາວິສະວະກຳບໍ່ແຮ່ ຈາກມະຫາວິທະຍາແຫ່ງຊາດລາວໃນປີ 2023 ໂດຍໄດ້ຮັບ ການສະໜັບສະໜູນ ດ້ານການເງິນຈາກ ບໍລິສັດ LXML.



### *ປະສົບການດ້ານວິຊາຊີບ*

ທ່ານ ຈັນສະໄໝ ໄດ້ ເລີ່ມຕົ້ນເຮັດວຽກ ກັບ ບໍລິສັດ LXML ໃນປີ 2009 ເປັນຫົວໜ້າຄຸມງານພາກສະໜາມ ໃນວຽກການລະບາຍນ້ຳ. ໃນໄລຍະ 15 ປີທີ່ຜ່ານມາ, ທ່ານ ໄດ້ປະຕິບັດພາລະບົດບາດຕ່າງໆ ລວມທັງ ຫົວໜ້າສາຍງານການລະບາຍນ້ຳ, ວິສາວະກອນດ້ານທໍລະນີວິທະຍາ, ວິສາວະກອນບໍ່ແຮ່ ແລະ ປະຈຸບັນເຮັດວຽກໃນຕຳ ແໜ່ງນັກວິສະວະກອນອາວຸໂສຝ່າຍທໍລະນີສາດ. ດ້ວຍຜົນງານ ແລະ ປະສົບການອັນກວ້າງໄກ ຂອງທ່ານ ໃນວຽງານດ້ານອຸທົກກະສາດ ແລະ ທໍລະນີວິທະຍາ ຈຶ່ງໄດ້ປະກອບສ່ວນ ອັນສຳຄັນເຂົ້າໃນການຄຸ້ມຄອງນ້ຳ ຢ່າງມີປະສິດທິພາບຢູ່ LXML, ເພື່ອຮັບປະກັນ ດ້ານຄວາມປອດໄພ, ການປະຫຍັດຄ່າໃຊ້ຈ່າຍ ແລະ ການປະຕິບັດຕາມຂໍ້ກຳນົດ ດ້ານສິ່ງແວດລ້ອມຢ່າງມີປະສິດທິພາບ.

### *ການບໍລິຫານຈັດການກັບສິ່ງທ້າທາຍ*

ທ່ານໄດ້ເລີ່ມຕົ້ນ ການເຮັດວຽກໂດຍມີຂໍ້ຈຳກັດ ທາງດ້ານພາສາອັງກິດ ແລະ ບໍ່ມີພື້ນຖານທາງດ້ານອຸທົກກະສາດ ຢ່າງເປັນມືອາຊີບ, ທ່ານ ກໍ່ໄດ້ປະເຊີນກັບສິ່ງທ້າທາຍທີ່ສຳຄັນຫຼາຍຢ່າງ, ແຕ່ເຖິງຢ່າງໃດກໍ່ຕາມ, ຄວາມຕັ້ງໃຈໃນການຮຽນຮູ້ ແລະ ພັດທະນາຕົນເອງ ຂອງທ່ານ ໄດ້ພາທ່ານ ຜ່ານຜ່າອຸປະສັກນາໆປະການເຫຼົ່ານີ້ ໂດຍຜ່ານການຮຽນຮູ້ດ້ວຍຕົນເອງ, ທ່ານຈຶ່ງໄດ້ເຂົ້າຮຽນພາສາອັງກິດ ແລະ ປຶກສາຂໍຄຳແນະນຳ ຈາກເພື່ອນຮ່ວມງານ. ຄວາມກະຕືລືລົ້ນຂອງທ່ານ ໃນການບໍລິຫານຄຸ້ມຄອງນ້ຳ ແລະ ການອຸທິດຕົນ ເພື່ອການຮຽນຮູ້ຢ່າງຕໍ່ເນື່ອງ ແມ່ນກຸນແຈສຳຄັນຕໍ່ຄວາມສຳ ເລັດ ຂອງທ່ານໃນຄັ້ງນີ້.

### *ແຮງຈູງໃຈ ແລະ ຄວາມປາຖະໜາໃນອະນາຄົດ*

ແຮງຈູງໃຈຂອງທ່ານ ທີ່ຈະສືບຕໍ່ສຶກສາໃນວຽກງານ ດ້ານອຸທົກກະສາດນ້ຳໃຕ້ດິນ ແມ່ນມາຈາກຄວາມເຊື່ອໝັ້ນຂອງທ່ານ ໂດຍການໃຫ້ຄວາມສຳຄັນ ໃນການຄຸ້ມຄອງນ້ຳແບບຍືນຍົງ ໃຫ້ແກ່ວຽກງານການຂຸດຄົ້ນບໍ່ແຮ່ ແລະ ການພັດທະນາຊຸມຊົນ. ເພື່ອຍົກລະດັບຄວາມຮູ້ ແລະ ທັກສະທີ່ຊຳນານຂຶ້ນຕື່ມໃນຄັ້ງນີ້ ທ່ານເອງແມ່ນມີເປົ້າໝາຍ ທີ່ຈະປະກອບສ່ວນອັນສຳຄັນ ເຂົ້າໃນການພັດທະນາຂອງ ສປປ ລາວ ແລະ ເປົ້າໝາຍທຸລະກິດຂອງ LXML. ວິໄສທັດຂອງທ່ານ ແມ່ນ ການປັບປຸງການປະຕິບັດການຄຸ້ມຄອງນ້ຳ ໃນຂະແໜງການຕ່າງໆ ເຊັ່ນ: ວຽກງານການຂຸດຄົ້ນບໍ່ແຮ່, ກະສິກຳ ແລະ ການສະໜອງນ້ຳໃຫ້ມີປະສິທິພາບຍິ່ງໆຂຶ້ນ.

### *ອະນາຄົດອັນສົດໃສໃນພາຍໜ້າ*

ດ້ວຍທຶນການສຶກສາ ຂອງປະເທດອິດສະຕຣາລີ ຈະເຮັດໃຫ້ທ່ານມີໂອກາດ ເພີ່ມທັກສະຄວາມຊຳນານ ແລະ ນຳເອົາຄວາມຮູ້ອັນລ້ຳຄ່າກັບມາພັດທະນາ ປະເທດລາວ. ການເດີນທາງ ໃນຊີວິດການງານຂອງທ່ານ ຈາກໝູ່ບ້ານນ້ອຍໆໃນທ້ອງຖິ່ນ ໄປສູ່ນັກວິຊາການລະດັບສາກົນ ແມ່ນເປັນຂໍ້ພິສູດເຖິງການທຸ້ມເທເຮັດວຽກໜັກ ຂອງທ່ານ ແລະ ການສະໜັບສະໜູນຂອງ LXML ໃນການພັດທະນາຊັບພະຍາກອນມະນຸດ. ຜົນສຳເລັດດັ່ງກ່າວ ບໍ່ພຽງແຕ່ເປັນຂີດໝາຍອັນສຳຄັນ ຂອງສ່ວນບຸກຄົນເທົ່ານັ້ນ ແຕ່ຍັງເປັນຂີດໝາຍອັນສຳຄັນ ທີ່ຊີ້ໃຫ້ເຫັນເຖິງ ຄວາມເອົາໃຈໃສ່ຂອງ LXML ໃນການສົ່ງເສີມພະນັກງານຂອງຕົນຜູ້ທີ່ມີພອນສະຫວັນ ແລະ ຄວາມປາດຖະໜາ ຢາກປະກອບສ່ວນ ເຂົ້າໃນການພັດທະນາແບບຍືນຍົງໃນ ສປປ ລາວ.






# ຄະນະຜູ້ນຳຈາກວິທະຍາໄລວິຊາຊີບ ເຫວີຍຟາງ, ເຂົ້າຢ້ຽມຢາມ LXML ທີ່ນະຄອນຫຼວງ ວຽງຈັນ

ວັນທີ 5 ພະຈິກ 2024, ຄະນະນຳອາວຸໂສຈາກ ວິທະຍາໄລວິຊາຊີບ ເຫວີຍຟາງ, ທ່ານ ເສີນ ເມເສີຍ, ຮອງປະທານວິທະຍາໄລ ພ້ອມດ້ວຍຄະນະອີກສີ່ທ່ານ ໄດ້ເຂົ້າຢ້ຽມຢາມຫ້ອງການ LXML ທີ່ນະຄອນຫຼວງວຽງຈັນ. ໃນລະຫວ່າງການເຂົ້າຢ້ຽມຢາມນີ້, ຄະນະຜູ້ແທນໄດ້ມີການສົນທະນາ ກ່ຽວກັບ ການຈັດຫຼັກສູດ ຝຶກອົບຮົມວິຊາຊີບສຳລັບພະນັກງານ LXML ແລະ ຍັງໄດ້ມີການເປີດປ້າຍ ພິທີເປີດຕົວຫ້ອງຮຽນພາສາຈີນ ແລະ ໂຄງການຫຼັກສູດ Ban.Mo ອີກດ້ວຍ.

ຕາງໜ້າ ເຂົ້າຮ່ວມກອງປະຊຸມຈາກ LXML ໂດຍ ຮອງຜູ້ຈັດການໃຫຍ່ຂອງ LXML, ທ່ານ ໂຈ ຊິນປີງ, ທ່ານ ໂອເປຊາ ພິມມະຈັກ, ຫົວໜ້າສາຍງານ ດ້ານການຝຶກອົບຮົມ ແລະ ທ່ານ ນາງ ແອັບໂປ ຊ່າວ, ຜູ້ປະສານງານຝຶກອົບຮົມ ດ້ານການພັດທະນາວິຊາຊີບ. ຄະນະທາງສອງຝ່າຍໄດ້ຮ່ວມກັນສົນທະນາ ໂດຍມຸ່ງເນັ້ນເຖິງວິທີການ ທີ່ວິທະຍາໄລວິຊາຊີບພາຍໃນປະເທດ ຈະສາມາດຈັດຫຼັກສູດຝຶກອົບຮົມ ດ້ານພາສາ, ວັດທະນະທຳ ແລະ ວິຊາສະເພາະທາງເຕັກນິກ ທີ່ປັບໃຫ້ເໝາະສົມກັບຄວາມຕ້ອງການ ຂອງພະນັກງານ LXML.

ທ່ານຮອງປະທານ ເສີນ ໄດ້ກ່າວເຖິງຄວາມມຸ່ງໝັ້ນ ຂອງວິທະຍາໄລທີ່ຈະຈັດການຍົກລະດັບ ການພັດທະນາໃຫ້ແກ່ LXML ຜ່ານການຝຶກອົບຮົມທາງດ້ານເຕັກນິກ ທີ່ມີຄຸນນະພາບສູງ. ໃນໂອກາດດັ່ງກ່າວ, ຮອງຜູ້ຈັດການໃຫຍ່ຂອງ LXML, ທ່ານ ໂຈ ຊິນປີງ ໄດ້ກ່າວວ່າ ແນວທາງໃໝ່ເຫຼົ່ານີ້ ຈະເປັນສິ່ງສຳຄັນໃນການພັດທະນາພະນັກງານ ແລະ ຊ່ວຍພັກດັນຄວາມສຳເລັດ ໃນໄລຍະຍາວຂອງ LXML.

ສິ່ງເຫຼົ່ານີ້ ໄດ້ສະແດງໃຫ້ເຫັນເຖິງແນວຄິດລິເລີ່ມ ໃນການຮ່ວມມືພັດທະນາຢ່າງແໜ້ນແຟ້ນ ໂດຍທັງສອງຝ່າຍ ແມ່ນມີຄວາມມຸ່ງໝັ້ນທີ່ຈະສົ່ງເສີມຄວາມຮ່ວມມື ອັນລຶກຊຶ້ງລະຫວ່າງສອງປະເທດ ຈີນ ແລະ ລາວ. ນອກນີ້ຍັງຈະສາມາດພັດທະນາພະນັກງານ LXML ໃຫ້ມີຄວາມຮູ້ຄວາມສາມາດທີ່ສູງຂຶ້ນຕື່ມ.





# LXML ເຊໂປນ ສືບຕໍ່ສະໜັບສະໜູນ ທຶນການສຶກສາວິຊາຊີບໃຫ້ແກ່ນັກຮຽນໃນທ້ອງຖິ່ນເມືອງ ວິລະບູລີ

ວັນທີ 1 ຕຸລາ 2024 ຢູ່ທີ່ໂຮງຮຽນເຕັກນິກລາວ-ເຢຍລະມັນ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ຮັບນັກຮຽນຝຶກງານຊ່າງເຕັກນິກ-ກຸ່ມທີ່ 3 ຂອງ ປີ 2024 ເພື່ອເຂົ້າໄປນຳສະເໜີຕົວ ແລະ ຢ້ຽມຢາມໂຮງຮຽນກ່ອນການຮຽນ. ນັກຮຽນຝຶກງານວິຊາຊີບຊ່າງເຕັກນິກ ກຸ່ມທີ່ 3 ນີ້ ມີທັງໝົດ 18 ຄົນ ທີ່ໄດ້ຜ່ານການສອບເສັງ-ຄັດຈ້ອນມາຈາກໂຮງຮຽນ ມັດທະຍົມສົມບູນ ພາຍໃນເມືອງວິລະບູລີ ເພື່ອເຂົ້າຮ່ວມໂຄງການນັກຮຽນ ຊ່າງເຕັກນິກ ເລີ່ມແຕ່ປີ 2024-2028. ລວມທັງໝົດ 3 ລຸ້ນ ແມ່ນ 54 ຄົນ.

ຈາກນັ້ນ ກໍ່ໄດ້ພານັກຮຽນກຳໄດ້ເຂົ້າມາຢ້ຽມຢາມ ຫ້ອງການວຽງຈັນ ຂອງບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ແລະ ເພື່ອໃຫ້ການແນະນຳກ່ຽວກັບວຽກງານ ຂອງບໍລິສັດ ເຂົ້າຮ່ວມຕ້ອນຮັບ ແລະ ໃຫ້ຄຳແນະນຳຕໍ່ນັກຮຽນ ຊ່າງເຕັກນິກ ໂດຍທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML ພ້ອມດ້ວຍຄະນະ.

ໂຄງການນັກຮຽນຊ່າງເຕັກນິກ ປີ 2024-2028 ແມ່ນສືບເນື່ອງມາຈາກບົດບັນທຶກຄວາມເຂົ້າໃຈ (MoU) ໄລຍະ 3 ປີ ທີ່ສອງຝ່າຍໄດ້ລົງນາມຮ່ວມກັນໃນກາງປີ 2022. ຄູສອນຊ່ຽວຊານ-ວິຊາຊີບຂອງ ວິທະຍາໄລເຕັກນິກ ລາວ-ເຢຍລະມັນ ໄດ້ອະທິບາຍເຖິງຄວາມຄືບໜ້າ ແລະ ການເຄື່ອນໄຫວ ໃນການຝຶກຫັດຂອງນ້ອງນັກຮຽນ 18 ຄົນທຳອິດໃນປີ 2023. ບົດຮຽນສຳຄັນທີ່ຖອດຖອນໄດ້ ຈາກການສົນທະນາໃນຄັ້ງນີ້ ຈະນຳໄປໝູນໃຊ້ ໃນການປັບປຸງນັກຮຽນກຸ່ມທີ 3 ໃຫ້ດີກວ່າເກົ່າ, ພ້ອມທັງນຳເອົາຄຳແນະນຳ ຫຼື ຂໍ້ສະເໜີຈາກ ທາງວິທະຍາໄລ ແລະ ບໍລິສັດ ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນທີ່ດີກວ່າເກົ່າ.

ໂຄງການດັ່ງກ່າວ ໄດ້ປະກອບມີການຝຶກອົບຮົມວຽກງານ ດ້ານເຕັກນິກວິຊາຊີບ ທັງພາກທິດສະດີ ແລະ ພາກປະຕິບັດຕົວຈິງຢູ່ໂຮງຮຽນ ແລະ ຍັງມີການລົງຝຶກໃນໜ້າວຽກຕົວຈິງ ຢູ່ພາກສະໜາມຂອງ ບໍ່ຄຳ-ທອງ ເຊໂປນ ອີກດ້ວຍ. ທຶນການສຶກສາດັ່ງກ່າວ ແມ່ນລວມມີສິ່ງອຳນວຍຄວາມສະດວກ ໃນການຮຽນຢູ່ທີ່ໂຮງຮຽນເຊັ່ນ: ເງິນເດືອນ,ຄ່າຮຽນ, ຄ່າກິນຢູ່ພັກເຊົ່າ, ອຸປະກອນການຮຽນ, ເຄື່ອງນຸ່ງຫົ່ມ, ຈັກຊັກເຄື່ອງ, ການເດີນທາງ, ຄ່າກິນຢູ່ພັກເຊົາ ໃນໄລຍະເຂົ້າມາຝຶກງານຢູ່ພາກສະໜາມ ຂອງບໍລິສັດຕະຫຼອດປີແຕ່ເລີ່ມເຂົ້າຮຽນຈົນຈົບວິຊາຊີບ. ໃນລະຫວ່າງ ປີ 2015 ຫາ 2018 ທີ່ຜ່ານມາ, ມີນ້ອງນັກຮຽນຝຶກງານຈຳນວນ 18 ຄົນ ໄດ້ຮຽນຈົບຫຼັກສູດ 5 ປີ ໄດ້ຮັບໃບປະກາສະນິຍະບັດຂັ້ນ III ຂອງປະເທດອົດສະຕຣາລີ ແລະ ໃບປະກາດ ເຕັກນິກວິຊາຊີບຊັ້ນສູງຂອງລາວ ໃນດ້ານວຽກງານເຕັກນິກວິຊາຊີບທີ່ມີຄວາມຊຳນານສູງ.

ນັກສຶກສາຊ່າງເຕັກນິກທຸກຄົນ ທີ່ຈົບການສຶກສາ ຈາກໂຄງການນັກຮຽນຊ່າງເຕັກນິກ ທີ່ສະໜັບສະໜູນໂດຍ LXML ແມ່ນໄດ້ຮັບທັກສະທີ່ຊຳນິຊຳນານ ແລະ ມີຄວາມເປັນມືອາຊີບ, ມີຄວາມພ້ອມ ແລະ ສາມາດເອົາໄປນຳໃຊ້ ແລະ ປະກອບສ່ວນເຂົ້າໃນການພັດທະນາວຽກງານ ຂອງເຂົາເຈົ້າຢູ່ທັງໃນ ສປປ ລາວ ແລະ ຕ່າງປະເທດ.

ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML ໄດ້ກ່າວວ່າ "LXML ມີຄວາມພາກພູມໃຈຫຼາຍ ທີ່ໄດ້ໃຫ້ການສະໜັບສະໜູນການຝຶກອົບຮົມວິຊາຊີບ ທີ່ມີຄຸນວຸດທິ ໃຫ້ແກ່ນ້ອງນັກຮຽນພາຍໃນຊຸມຊົນເມືອງວິລະບູລີ ແລະ ເພື່ອເປັນການປັບປຸງຊີວິດການເປັນຢູ່ທີ່ດີຂຶ້ນໃຫ້ແກ່ຄົນລຸ້ນຫຼັງ, ສ່ວນຄວາມຮູ້ຄວາມສາມາດ ແລະ ປະສົບການ ທີ່ໄດ້ຈາກການຮຽນຮູ້ ຂອງນັກຮຽນຜູ້ທີ່ໄດ້ເຂົ້າຮ່ວມໂຄງການ ຈະເປັນສິ່ງລ້ຳຄ່າ ເພື່ອປະກອບສ່ວນເຂົ້າໃນການດຳເນີນງານ ຂອງບໍ່ຄຳ-ທອງ ເຊໂປນ ກໍ່ຄືປະກອບສ່ວນເຂົ້າໃນການສ້າງສາພັດທະນາ ເສດຖະກິດ-ສັງຄົມ ແລະ ປະເທດຊາດ."

ນັບຕັ້ງແຕ່ເລີ່ມດຳເນີນງານ ໃນປີ 2003, LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ໃສ່ການຝຶກອົບຮົມ, ໃຫ້ທຶນການສຶກສາແກ່ຊ່າງສີມື, ນັກຮຽນ ແລະ ນັກສຶກສາຝຶກງານ. ມີນັກສຶກສາຫຼາຍກວ່າ 105 ຄົນ ແມ່ນໄດ້ສຳເລັດການສຶກສາຈາກໂຄງການສຶກສາຊ່າງສີມື ແລະ 36 ຄົນ ສຳເລັດການສຶກສາລະດັບອາຊີບຈາກ ຕ່າງປະເທດ ດ້ວຍທຶນການສຶກສາລະດັບສູງ ທີ່ທາງບໍລິສັດໄດ້ສະໜັບສະໜູນໃຫ້.




ນັບແຕ່ປີ 2003 ເຖິງປະຈຸບັນ ບໍລິສັດໄດ້ລົງທຶນໃສ່ ວຽກງານການຝຶກອົບຮົມ, ຍົກລະດັບວິຊາຊີບ ແລະ ທຶນການສຶກສາ ໃຫ້ແກ່ພະນັກງານຄົນລາວຫຼາຍກວ່າ 4 ລ້ານ ໂດລາສະຫະລັດ ຊຶ່ງໃນນັ້ນ, ແມ່ນໄດ້ສິ່ງເສີມການຝຶກອົບຮົມວິຊາຊີບ ແລະ ສິ່ງອຳນວຍຄວາມສະດວກໃນການສຶກສາ ໃຫ້ແກ່ໂຮງຮຽນວິຊາຊີບ ແຂວງສະຫວັນນະເຂດ ເກືອບ 1 ລ້ານ ໂດລາ ສະຫະລັດ. ນອກນີ້, ຍັງໄດ້ສະໜອງໂຄງການຝຶກອົບຮົມດ້ານ ວຽກງານວິຊາສະເພາະຢູ່ກັບທີ່ ໃນບ່ອນເຮັດວຽກໃຫ້ແກ່ພະນັກງານ ຢູ່ພາກສະໜາມຢ່າງເປັນປະຈຳ.



# ສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 49 ປີ ທີ່ ບໍ່ຄຳ-ທອງ ເຊໂປນ

ໃນວັນທີ 3 ທັນວາ 2024 ຜ່ານມານີ້ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ຈັດງານສະເຫຼີມສະຫຼອງ ວັນຊາດທີ 2 ທັນວາ ຄົບຮອບ 49 ປີ ຢູ່ທີ່ພາກສະໜາມ ບໍ່ຄຳ-ທອງ ເຊໂປນ, ເມືອງວິລະບູລີ, ແຂວງສະຫວັນນະເຂດ. ເຂົ້າຮ່ວມງານດັ່ງກ່າວ ໂດຍຕາງໜ້າຈາກພາກລັດຖະບານ ກໍ່ຄືການນຳເມືອງວິລະບູລີ ໂດຍການໃຫ້ກຽດເຂົ້າຮ່ວມເປັນແຂກກິຕິມະສັກຂອງ ທ່ານ ວາລິຍະ ສີຈັນທອງທິບ, ເຈົ້າເມືອງວິລະບູລີ ພ້ອມດ້ວຍຄະນະ. ຈາກຝ່າຍ LXML ມີ ທ່ານ ກາວ ປິ່ວ ປະທານ LXML, ທ່ານ ໂຈ ຊິນປິງ, ຮອງຜູ້ຈັດການໃຫຍ່ LXML, ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML, ທ່ານ ເຈເຣມີ ເດວິດຊັນ, ວ່າການຜູ້ຈັດການໃຫຍ່ LXML ພ້ອມດ້ວຍພະນັກງານທັງ ແລະ ບັນດາຜູ້ຮັບເໝົາເຂົ້າຮ່ວມ. ງານສະເຫຼີມສະຫຼອງຄັ້ງນີ້ ເພື່ອແນ່ໃສ່ຊົມເຊີຍວັນສະຖາປະນາຂອງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 49 ປີ ແລະ ເພື່ອເນັ້ນຢ້ຳໃຫ້ເຫັນເຖິງຄວາມອຸດົມສົມບູນ ຂອງມໍລະດົກທາງວັດທະນະທຳ ອັນດີງາມ ຕະຫຼອດການພັດທະນາຂອງປະເທດຊາດ.

ການສະເຫຼີມສະຫຼອງ ວັນຊາດລາວ ຢູ່ ບໍ່ຄຳ-ທອງ ເຊໂປນ ປີນີ້, ກາຍເປັນຂີດໝາຍ ຊີ້ບອກເຖິງຄວາມມຸ່ງໝັ້ນຂອງບໍລິສັດ ທີ່ມີຕໍ່ປະຊາຊົນລາວ ແລະ ການປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມຂອງປະເທດຊາດ. ນອກນີ້, ກໍຍັງເປັນການສະແດງໃຫ້ເຫັນເຖິງ ການອຸທິດຕົນຂອງບໍລິສັດ ໃນການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາຊຸມຊົນແບບຍືນຍົງອີກດ້ວຍ.

ທ່ານ ກາວ ປິ່ວ ປະທານ LXML ໄດ້ກ່າວວ່າ "ໃນນາມປະທານບໍລິສັດ, ຂ້າພະເຈົ້າຮູ້ສຶກເປັນກຽດ ທີ່ໄດ້ເປັນສ່ວນໜຶ່ງ ຂອງການສະເຫຼີມສະຫຼອງງານອັນສຳຄັນໃນຄັ້ງນີ້, ເຊິ່ງເປັນການສະເຫຼີມສະຫຼອງ ທີ່ກ້າວຂ້າມຊາຍແດນ ແລະ ວັດທະນະທຳ ແລະ ຍັງເນັ້ນໜັກເຖິງຄຸນຄ່າ ຂອງປວງຊົນລາວ ແລະ ພະນັກງານຄົນລາວຂອງພວກເຮົາ ທີ່ໄດ້ອຸທິດຕົນຮ່ວມກັນ. ເຖິງແມ່ນວ່າ ຂ້າພະເຈົ້າມາຈາກພື້ນຖານວັດທະນະທຳ ທີ່ແຕກຕ່າງ, ແຕ່ຂ້າພະເຈົ້າ ກໍ່ນັບຖືມູນມໍລະດົກວັດທະນະທຳ ແລະ ຈິດໃຈຂອງປວງຊົນລາວຢ່າງເລິກເຊິ່ງ. ຂ້າພະເຈົ້າຮັບຮູ້ເຖິງຄວາມໝາຍ ຄວາມສຳຄັນຂອງມື້ນີ້ ຊຶ່ງບໍ່ພຽງແຕ່ເປັນວັນພັກທາງລັດຖະການ ຂອງປະເທດເທົ່ານັ້ນ ແຕ່ຍັງເປັນຊ່ວງເວລາຂອງຄວາມສາມັກຄີ ແລະ ຄວາມມຸ່ງໝັ້ນເພື່ອອະນາຄົດ ຂອງປະເທດຊາດອັນໂດດເດັ່ນນີ້. ໃນຂະນະນີ້ທີ່ພວກເຮົາພວມສະເຫຼີມສະຫຼອງ ວັນຊາດລາວ ຂ້າພະເຈົ້າຂໍຮຽກຮ້ອງໃຫ້ທຸກຄົນຢືນຢັນຄືນເຖິງວິໄສທັດ ແລະ ຄວາມມຸ້ງໝັ້ນທີ່ມີຕໍ່ກັນ. ພວກເຮົາຈຶ່ງພ້ອມກັນ ອົດທົນສູ້ຊົນເພື່ອອະນາຄົດທີ່ດີ ໃຫ້ນຳບໍລິສັດ LXML ກ້າວຂຶ້ນໄປໃຫ້ໄດ້ຫຼາຍກວ່າຄຳວ່າ ຜູ້ນຳດ້ານການຂຸດຄົ້ນບໍ່ແຮ່ ແລະ ເປັນຕົວແບບ ຂອງການພັດທະນາທີ່ມີຄວາມຮັບຜິດຊອບ ແລະ ມີຄວາມຍືນຍົງ. ເປົ້າໝາຍຍຸດທະສາດຂອງພວກເຮົາແມ່ນ ສຸມໃສ່ການປັບປຸງປະສິດທິພາບ ການດຳເນີນງານ, ຖືເອົາຄວາມປອດໄພ ເປັນບຸລິມະສິດສຳຄັນ ແລະ ຮັບປະກັນວ່າວຽກທີ່ພວກເຮົາເຮັດ ຈະສາມາດສ້າງຜົນປະໂຫຍດອັນຍາວນານ ໃຫ້ແກ່ຊຸມຊົນທີ່ພວກເຮົາດຳເນີນງານຢູ່."

ໂອກາດດັ່ງກ່າວ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML ໄດ້ຂຶ້ນກ່າວໂດຍມີຄຳເຫັນບາງຕອນວ່າ "ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ຕະຫຼອດໄລຍະ 49 ປີ ທີ່ຜ່ານມາ, ວັນຊາດ ທີ 2 ທັນວາ ໄດ້ເປັນວັນທີ່ມີຄວາມໝາຍຄວາມສຳຄັນຍິ່ງ ຂອງທົ່ວພັກ, ທົ່ວລັດ ແລະ ປວງຊົນລາວທຸກຊົນເຜົ່າ. ສປປ ລາວ ໄດ້ມີຄວາມເປັນເອກະລາດ, ມີອະທິປະໄຕຢ່າງຄົບຖ້ວນ ແລະ ໄດ້ກ້າວຂຶ້ນທຽມທັນກັບບັນດາປະເທດອື່ນໆ ໃນເວທີສາກົນ. ໃນທຸກໆປີ, ຢູ່ພາກສະໜາມ ບໍ່ຄຳ-ທອງ ເຊໂປນ! ພວກເຮົາແມ່ນມີງານສະເຫລີມສະຫຼອງວັນຊາດ ທີ 2 ທັນວາ ຊຶ່ງເປັນການສະເຫລີມສະຫຼອງ ວັນມະຫາໄຊອັນຍິ່ງໃຫຍ່ ທີ່ເຕັມໄປດ້ວຍຄວາມພາກພູມໃຈຂອງຄົນໃນຊາດ, ເຊິ່ງໄດ້ມາຈາກການຕໍ່ສູ້ກູ້ຊາດ ອັນຍືດເຍື້ອຍາວນານ ຂອງບັນພະບູລຸດເຮົາ ພ້ອມດ້ວຍເລົ່ານັກຮົບວິລະຊົນ ແລະ ປະຊາຊົນບັນດາເຜົ່າ ທີ່ໄດ້ເສຍສະຫຼະເລືອດເນື້ອເພື່ອຊາດ, ໄຊຊະນະທີ່ແລກມາໄດ້ດ້ວຍຍາດເຫື່ອ ແລະ ນ້ຳຕາ ຂອງການນຳ ແລະ ເລົ່ານັກຮົບຜູ້ຮັກຊາດ-ກ້າຫານ, ຈາກທຸກເຜົ່າຊົນ ທີ່ໄດ້ຕໍ່ສູ້ກູ້ຊາດ ດ້ວຍນ້ຳໃຈເສຍສະຫຼະ ຈຶ່ງໄດ້ວັນນີ້ມາເປັນວັນຊາດ ມາໃຫ້ປະຊາຊົນລາວທຸກຊົນເຜົ່າ ໄດ້ຮ່ວມກັນສະເຫລີມສະຫລອງກັນ ຢ່າງເບີກບານມ່ວນຊື່ນ ໃນຂອບເຂດທົ່ວປະເທດ."

ການສະເຫລີມ ສະຫລອງວັນສະຖາປະນາຂອງ ສປປ ລາວ ຄົບຮອບ 49 ປີ ໃນປີນີ້ໄດ້ສ້າງໂອກາດ ແລະ ຄວາມເບີກບານມ່ວນຊື່ນ ທີ່ສະທ້ອນໃຫ້ເຫັນ ເຖິງຈິດໃຈຂອງຄວາມສາມັກຄີ, ຄວາມຫຼາກຫຼາຍ ແລະ ຄວາມກ້າວໜ້າ ຊຶ່ງເປັນໂອກາດ ເພື່ອສະເຫຼີມສະຫຼອງຜົນສຳເລັດຂອງ ສປປ ລາວ ແລະ ສານຕໍ່ຄວາມມຸ້ງໝັ້ນຂອງພວກເຮົາ ໃນການສ້າງອະນາຄົດທີ່ສົດໃສກວ່າເກົ່າ.

ທ່ານ ເຈເຣມີ ເດວິດຊັນ, ວ່າການຜູ້ຈັດການໃຫຍ່ LXML ໄດ້ຂຶ້ນມີຄຳເຫັນ ໂດຍເນັ້ນຢ້ຳເຖິງວັນສຳຄັນດັ່ງກ່າວ ພ້ອມທັງລາຍງານຜົນການດຳເນີນງານ ຂອງບໍລິສັດວ່າ: "ຂ້າພະເຈົ້າມີຄວາມຍິນດີຫຼາຍ ທີ່ໄດ້ຈາລຶກ ວັນສຳຄັນ ຄືວັນສະຖາປະນາ ສປປ ລາວ ຄົບຮົບ 49 ປີ ແລະ ພັກປະຊາຊົນປະຕິວັດລາວຄົບຮອບ 69 ປີ ຢູ່ທີ່ນີ້. ໃນໄລຍະ 49 ປີທີ່ຜ່ານມາ, ສປປ ລາວ ໄດ້ບັນລຸການພັດທະນາທາງດ້ານ ເສດຖະກິດ-ສັງຄົມຢ່າງມະຫາສານ ແລະ ຍັງສືບຕໍ່ຂະຫຍາຍຕົວຢ່າງວ່ອງໄວ. LXML ໄດ້ປະກອບສ່ວນ ຢ່າງເຂັ້ມແຂງຕໍ່ການພັດທະນາ ສປປ ລາວ ໃນໄລຍະ 2 ທົດສະວັດທີ່ຜ່ານມາ. ພາຍໃຕ້ການຊີ້ນຳ ຂອງບໍລິສັດແມ່ກໍ່ຄື ຊື່ເຟີງ ໂກນລ໌ ຈະສາມາດ ຮັບປະກັນການສ້າງປະໂຫຍດ ທີ່ດີ ເພື່ອສືບຕໍ່ສ້າງພື້ນຖານເສດຖະກິດ-ສັງຄົມ ທີ່ເຂັ້ມແຂງແກ່ການດຳເນີນງານບໍ່ແຮ່ ແລະ ຈົນກວ່າໄລຍະການປິດບໍ່. ໃນປີນີ້, ພວກເຮົາມີຜົນໄດ້ຮັບອັນໂດດເດັ່ນໃໝ່ ໂດຍສະທ້ອນ ຈາກການເປີດໂຄງການຂະຫຍາຍຂຸດຄົ້ນຄຳ ພາກຕາເວັນຕົກ ຊຶ່ງເປັນການສືບເນື່ອງມາຈາກ ບໍ່ແຮ່ໃຕ້ດິນຂອງບໍລິສັດ. LXML ຍັງຄົງປະເຊີນໜ້າ ກັບສິ່ງທ້າທາຍຫຼາຍປະການ ເປັນຕົ້ນແມ່ນວຽກງານດ້ານຄວາມປອດໄພ ທີ່ບໍ່ສາມາດບັນລຸຕາມເປົ້າໝາຍ ແລະ ຜົນການຜະລິດຄຳ ທີ່ບໍ່ໄດ້ຕາມແຜນທີ່ວາງໄວ້ອັນເນື່ອງມາຈາກ ຄຸນນະພາບສິນແຮ່ທີ່ຕ່ຳ ແລະ ການສະກັດແຮ່ ທີ່ບໍ່ໄດ້ເຕັມປະສິດທິພາບ"

ການສະເຫຼີມສະຫຼອງ ວັນຊາດທີ 2 ທັນວາ ກໍ່ຍັງຊີ້ໃຫ້ເຫັນເຖິງການປະກອບສ່ວນ ຂອງບໍລິສັດຕໍ່ປະຊາຊົນ ແລະ ຊຸມຊົນທ້ອງຖິ່ນ, ລວມທັງການສະໜັບສະໜູນ ດ້ານການສຶກສາ, ສາທາລະນະສຸກ, ການພັດທະນາພື້ນຖານໂຄງລ່າງ ແລະ ຊີວິດການເປັນຢູ່ ຂອງປະຊົນທີ່ຢູ່ອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ.





# ກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມ ຂັ້ນທ້ອງຖິ່ນ ກ່ຽວກັບ ESIA ຂອງໂຄງການ ຂະຫຍາຍຂຸດຄົ້ນຄຳພາກຕາເວັນຕົກ

ເມື່ອບໍ່ດົນມານີ້ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ (LXML) ໄດ້ຈັດກອງປະຊຸມປຶກສາຫາລື ແບບມີສ່ວນຮ່ວມຂັ້ນທ້ອງຖິ່ນ ກ່ຽວກັບ ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມສິ່ງແວດລ້ອມ ຂອງໂຄງການຂະຫຍາຍຂຸດຄົ້ນຄຳ ພາກຕາເວັນຕົກ ຂອງ ບໍ່ຄຳ-ທອງ ເຊໂປນ, ທີ່ເມືອງວິລະບູລີ, ແຂວງສະຫວັນນະເຂດ.

ໂດຍພາຍໃຕ້ ການເປັນປະທານຂອງທ່ານ ຈັນເພັງໃສ ດາຣາຊະວົງ ຮອງຫົວໜ້າພະແນກຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດ, ຮ່ວມກັບທ່ານ ໄພມະນີ ວົງໄຊຄຳ, ຮອງເຈົ້າເມືອງວິລະບູລີ. ມີຜູ້ເຂົ້າຮ່ວມໂດຍຕາງໜ້າ ຈາກຊຸມຊົນທ້ອງຖິ່ນອ້ອມຂ້າງເຂດໂຄງການ, ພາກສ່ວນຂອງຜູ້ມີສ່ວນຮ່ວມ, ຕາງໜ້າພາກສ່ວນລັດຖະບານ ທີ່ກ່ຽວຂ້ອງເຊັ່ນ: ກົມປ່າໄມ້-ກະຊວງກະສິກຳ ແລະ ປ່າໄມ້; ກົມຊັບພະຍາກອນນ້ຳ ແລະ ກົມສິ່ງແວດລ້ອມ-ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ກົມຄຸ້ມຄອງບໍ່ແຮ່-ກະຊວງ ພະລັງງານ ແລະ ບໍ່ແຮ່; ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງສະຫວັນນະເຂດ; ພະແນກພະລັງງານ ແລະ ບໍ່ແຮ່ ແຂວງສະຫວັນນະເຂດ, ຕາງໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງວິລະບູລີ ແລະ ຕາງໜ້າອຳນາດການປົກຄອງເມືອງວິລະບູລີ ແລະ ມີບັນດາຜູ້ຈັດການພະແນກ ພ້ອມດ້ວຍພະນັກງານວິຊາການ ທີ່ກ່ຽວຂ້ອງ ຂອງ LXML.

ກອງປະຊຸມດັ່ງກ່າວ ແມ່ນເພື່ອແນໃສ່ໃຫ້ຂໍ້ມູນ ທີ່ຊັດເຈນກ່ຽວກັບວຽກງານ ESIA ແລະ EMMP, ລວມທັງມາດຕະການຫຼຸດຜ່ອນ ແລະ ທິດທາງ ເພື່ອແກ້ໄຂຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ອາດຈະເກີດຂຶ້ນ. ກອງປະຊຸມໄດ້ມີການຫາລືຮ່ວມກັນແບບເປີດກວ້າງ, ພ້ອມທັງແກ້ໄຂຄວາມກັງວົນທີ່ຊາວບ້ານ ແລະ ພາກສ່ວນກ່ຽວຂ້ອງ ໄດ້ຍົກຂຶ້ນມາ, ໂດຍສະເພາະ ກ່ຽວກັບຜົນກະທົບທີ່ອາດມີຕໍ່ທີ່ດິນ, ດ້ານການກະສິກຳຊຸມຊົນ ແລະ ອື່ນໆ. ຊຶ່ງຜູ້ຕາງຫນ້າຈາກບໍລິສັດ LXML ກໍໄດ້ອະທິບາຍຊີ້ແຈງແບບລະອຽດອ່ອນ ກ່ຽວກັບມາດຕະການ, ແຜນການຊົດເຊີຍ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການພັດທະນາໂຄງການ ໃຫ້ແກ່ທຸກພາກສ່ວນ.



ຫຼັງຈາກກອງປະຊຸມ, ຄະນະຜູ້ເຂົ້າຮ່ວມທຸກທ່ານລວມທັງ ບັນດາທ່ານຜູ້ຕາງໜ້າຈາກພາກລັດຖະບານຈາກສູນກາງ ແລະ ທ້ອງຖິ່ນ ກໍ່ໄດ້ເຂົ້າໄປຢ້ຽມຢາມເຂດພື້ນທີ່ຂອງໂຄງການຂະຫຍາຍຂຸດຄົ້ນຄຳພາກຕາເວັນຕົກ ດັ່ງກ່າວ.

ກອງປະຊຸມໄດ້ສິ້ນສຸດລົງຢ່າງຈົບງາມ, ພ້ອມດ້ວຍໝາກຜົນທີ່ດີ ໂດຍທຸກຝ່າຍໄດ້ຮັບຮູ້ ແລະ ມີຄວາມເຂົ້າໃຈໃນເບື້ອງຕົ້ນ ແລະ ກອງປະຊຸມປຶກສາຫາລື ແບບມີສ່ວນຮ່ວມຂັ້ນສູນກາງ ແມ່ນຈະໄດ້ຈັດຂຶ້ນໃນໄວໆນີ້.

ບໍລິສັດ LXML ຍາມໃດກໍ່ໃຫ້ຄຳໝັ້ນສັນຍາ, ໃຫ້ຄວາມສຳຄັນຕໍ່ການປົກປັກຮັກສາສິ່ງແວດລ້ອມ ແລະ ເບິ່ງແຍງ ຊີວິດການເປັນຢູ່ທີ່ດີຂອງຊຸມຊົນທ້ອງຖິ່ນອ້ອມຂ້າງ. ຊຶ່ງເປັນສ່ວນໜຶ່ງ ຂອງຄວາມພະຍາຍາມຢ່າງຕໍ່ເນື່ອງ ຂອງບໍລິສັດຕະຫຼອດມາ, ພວກເຮົາມີຄວາມຕັ້ງໃຈ ທີ່ຈະສົ່ງເສີມແນວທາງແບບຍືນຍົງ ແລະ ໃຫ້ການປະສານງານຢ່າງໂປ່ງໃສ ຕໍ່ຜູ້ມີສ່ວນຮ່ວມ ເພື່ອຮັບປະກັນຄວາມສຳພັນທີ່ດີຕໍ່ກັບສິ່ງແວດລ້ອມ ແລະ ຊຸມຊົນທ້ອງຖິ່ນ.






# LXML ຕ້ອນຮັບການເຂົ້າມາຢ້ຽມຢາມຂອງຄະນະ ສູນການສຶກສາ ແລະ ຮ່ວມມືດ້ານພາສາສາດ CLEC

ໃນວັນທີ 24 ທັນວາ 2024 ທ່ານ ໂຈ ຈືຈາງ, ຮອງຜູ້ອຳນວຍ ການຝ່າຍບໍລິຫານວຽກງານອາສາສະໝັກ ຈາກສູນການສຶກສາ ແລະ ການຮ່ວມມືດ້ານພາສາສາດຂອງ ສປ ຈີນ, ພ້ອມດ້ວຍຄະນະ 5 ທ່ານ ໄດ້ເຂົ້າມາຢ້ຽມຢາມ ຫ້ອງການ LXML ທີ່ ນະຄອນຫຼວງວຽງຈັນ. ໂດຍການຕ້ອນຮັບ ຢ່າງອົບອຸ່ນ ຈາກທ່ານ ໂຈ ຊິນປີງ ຮອງປະທານ LXML.

ຈຸດປະສົງຫຼັກ ຂອງການຢ້ຽມຢາມໃນຄັ້ງນີ້ ແມ່ນເພື່ອຮັບຮູ້ຢ່າງເລິກເຊິ່ງ ກ່ຽວກັບການຮ່ວມມືລະຫວ່າງ LXML ແລະ ວິທະຍາໄລເຫວີຍຟ່າງ ໂດຍສະເພາະໂຄງການ ຝຶກອົບຮົມພາສາຈີນ, ເພື່ອປະເມີນຜົນສຳເລັດ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດໂຄງການ ແລະ ສຶກສາ ກ່ຽວກັບວິທີການຈັດສັນ ຊັບພະຍາກອນອື່ນໆ ເພີ່ມເຕີມ ເພື່ອເສີມສ້າງການດຳເນີນ ໂຄງການ ແລະ ການພັດທະນາທີ່ມີ ປະສິດທິພາບ.

ນອກຈາກນັ້ນ ທ່ານ ໂຈ ຊິນປີງ ຍັງໄດ້ ນຳສະເໜີລາຍລະອຽດກ່ຽວກັບ ການພັດທະນາຂອງ LXML ໃນລາວ ແລະ ໄດ້ມີການສົນທະນາຢ່າງເລິກເຊິ່ງ ກັບຄະນະຜູ້ມາຢ້ຽມຢາມ ກ່ຽວກັບຄວາມຕ້ອງການ ໃນການນຳໃຊ້ພາສາຈີນ ແລະ ການຝຶກອົບຮົມທາງດ້ານເຕັກນິກ-ວິຊາຊີບ. ໃນກອງປະຊຸມຄະນະ ທຸກທ່ານໄດ້ຮ່ວມກັນແລກປ່ຽນ ແລະ ຊອກວິທີການ ໃຫ້ໂຄງການຝຶກອົບຮົມພາສາຈີນ ສາມາດສ້າງປະໂຫຍດທີ່ດີໄດ້ຫຼາຍຂຶ້ນໃຫ້ແກ່ບໍລິສັດ ແລະ ເພີ່ມທະວີອິດທິພົນ ຂອງໂຄງການໃນລະດັບສາກົນ. ທັງສອງຝ່າຍຍັງໄດ້ປຶກສາຫາລືກ່ຽວກັບຄວາມເປັນໄປໄດ້ ຂອງການສົ່ງຄູອາສາສະໝັກໃນອະນາຄົດ ໂດຍ CLEC ມີຈຸດປະສົງເພື່ອສົ່ງເສີມ ການສຶກສາພາສາຈີນ ໄປສູ່ລະດັບສາກົນ ໂດຍຜ່ານໂຄງການອາສາສະໝັກ.

ການຢ້ຽມຢາມຄັ້ງນີ້ ຈະສ້າງຄວາມເຂັ້ມແຂງ ໃຫ້ແກ່ການຮ່ວມມືລະຫວ່າງ CLEC ແລະ LXML ໂດຍສະເໜີແນວຄິດໃໝ່ໆ ໃນການປັບປຸງ ແລະ ການພັດທະນາໂຄງການຝຶກອົບຮົມພາສາຈີນ.



# ຕົວເລກ ແລະ ຂໍ້ມູນສຳຄັນ ຂອງບໍ່ຄຳ-ທອງ ເຊໂປນ

### ການພັດທະນາຄວາມສາມາດ

- **US$4ລ້ານ** ທຶນການສຶກສາຂັ້ນສາມ ໃຫ້ແກ່ພະນັກງານລາວ
- **US$0.68ລ້ານ** ສະໜັບສະໜູນອຸປະກອນຝຶກອົບຮົມ ແກ່ໂຮງ ຮຽນວິຊາຊີບ ສະຫວັນນະເຂດ
- **10,625ຄົນ** ຜູ້ເຂົ້າຮ່ວມຝຶກອົບຮົມ
- **ໂຄງການຝຶກອົບຮົມຂີດຄວາມສາມາດໃນພາກສະໜາມ** (ຄູຝຶກ, ການຝຶກອົບຮົມທາງການ ແລະ ຄຽງຄູ່ກັບການປະຕິບັດວຽກ)
- **54 ນັກຮຽນການຊ່າງ** ກຳລັງສຶກສາຢູ່ ວິທະຍາໄລ ເຕັກນິກລາວ - ເຢຍລະມັນ (GTC) 2022-2027

### ຊຸມຊົນ

- **US$56ລ້ານ** – ເກັບກູ້ UXO (58,500 ລູກ ແລະ ໃນພື້ນທີ່ 5,700ຮຕ)*
- **US$59ລ້ານ** – ລາຍຮັບ ຈາກການພັດທະນາທຸລະກິດຊຸມຊົນ*
- **US$14ລ້ານ** – ກອງທຶນພັດທະນາທ້ອງຖິ່ນ*
- **US$3.2ລ້ານ** – ກອງທຶນພັດທະນາບ້ານ - (2010 -2018)
- **US$103ແສນ** – ກອງທຶນຊຸກຍູ້ຊີວິດການເປັນຢູ່ໃຫ້ແກ່ກຸ່ມຜູ້ດ້ອຍໂອກາດ - FADG (2019 - ຮອດປັດຈຸບັນ)
- **US$1.8ລ້ານ** – ອານຸລັກມໍລະດົກວັດທະນະທຳແຫ່ງຊາດ ໂດຍຜ່ານ ແຜນງານຄົ້ນຄວ້າບູຮານວິທະຍາ
- **US$2.9ລ້ານ** – ໃຫ້ແກ່ລັດທະບານລາວ, LXML - ຢູນິເຊບ, ໂຄງການ 1000 ວັນ (2012 - ຮອດປັດຈຸບັນ)

### ການບໍລິຈາກ

- **US$1.5ລ້ານ** – ອຸປະກອນການແພດ, ໄພນ້ຳຖ້ວມ, ໜ່ວຍກູ້ໄພສຸກເສີນ ແລະ ອື່ນໆ
- **US$0.7ລ້ານ** – ຮັບມືກັບການແຜ່ລະບາດຂອງ COVID-19

### ພະນັກງານ

- **1,848** ພະນັກງານ LXML
- **1,697** ພະນັກງານ LXML ຄົນລາວ
- **151** ພະນັກງານ LXML ຄົນຕ່າງປະເທດ
- **484** ພະນັກງານ LXML ເບ້ຍມື້ ຄົນລາວ
- **10** ພະນັກງານ LXML ເບ້ຍມື້ ຄົນຕ່າງປະເທດ
- **2,091** ຜູ້ຮັບເໝົາຄົນລາວ
- **134** ຜູ້ຮັບເໝົາ ຄົນຕ່າງປະເທດ

### ລາຍຮັບແກ່ ສປປ ລາວ

- **US$1.7ຕື້** – ປະກອບສ່ວນລາຍຮັບ (ອາກອນ, ຄ່າຊັບພະຍາ ກອນ, ເງິນປັນຜົນ)*

*(ຕົວເລກຮອດເດືອນ ພະຈິກ 2024)*

**ຕົວເລກນັບແຕ່ເລີ່ມການດຳເນີນງານມາຮອດປັດຈຸບັນ*

## ຜົນປະໂຫຍດໂດຍກົງ ໃຫ້ແກ່ລັດຖະບານ ລາວ

| ປະເພດລາຍຈ່າຍ | 2003 | 2004 | 2005 | 2006 | 2007 | 2008 | 2009 | 2010 | 2011 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 | 2021 | 2022 | 2023 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ອາກອນກຳໄລ | - | - | 7,084,614 | 49,597,408 | 90,4165,511 | 77,982,632 | 57,519 ,277 | 92,272,995 | 145,250,403 | 20,199,683 | 91,045,147 | 71,338,60 | 36,150,880 | - | - | - | 9,339,408 | 8,445,156 | 13,499,085 | 14,682,226 | 28,014,780 |
| ຄ່າຊັບພະຍາກອນ (ຄຳ) | 1,407,309 | 1,669,479 | 3,112,153 | 4,375, 575 | 3,3476,907 | 3,549,102 | 4,731,818 | 5,799,522 | 5,024,414 | 5,490,591 | 2,538,117 | 29,400 | - | - | - | - | - | 3,500,674 | 14,879,454 | 17.400,275 | 18,908,845 |
| ຄ່າຊັບພະຍາກອນ (ທອງ) | - | - | 4,055,570 | 16,994,322 | 19,294,801 | 18,570,338 | 14,565,258 | 20,733,546 | 31,364,656 | 30,377,666 | 30,607,324 | 27,579,460 | 22,092,698 | 17,241,850 | 17,533,000 | 20,989,646 | 19,060,685 | 11,007,349 | 2,367,997 | 2.627,774 | 2,732,978 |
| ອາກອນລາຍໄດ້ | 1,100,818 | 1,5387,93 | 1,942,753 | 1,946,614 | 2,727,263 | 3,892,519 | 3,376,719 | 5,0532,699 | 5,055 ,462 | 5,877,222 | 5,727,974 | 4,404,207 | 3,767,380 | 2,644,556 | 2,511,332 | 2,562,724 | 2,332,901 | 2,549,341 | 2,967,538 | 3.397,691 | 4,198,110 |
| ຄ່າສຳປະທານທີ່ດິນ | 4,796 | 33,469 | 33,469 | 33,469 | - | - | 113,200 | - | 90,000 | - | 144,570 | 49,655 | 49,655 | 49,655 | 49,655 | 49,655 | 61,155 | 61,155 | 61,155 | 61,155 | 1,097,276 |
| ພາສີນ້ຳມັນ + ນ້ຳມັນເຄື່ອງ + ລົດເບົາ + ອາກອນມູນຄາເພີ່ມ | - | - | 2,000,000 | 2,000 ,000 | 2,000,000 | 4,200 ,00 | 2,000,000 | 2,500,000 | 4,835,361 | 4,822,086 | 4,152,299 | 3,863,436 | 4,360,252 | 2,686,908 | 3,920,203 | 3,786,799 | 5,140,063 | 6,938,358 | 13,451,958 | 10,472,978 | 9,389,176 |
| ເງິນປັນຜົນ | - | - | - | - | 9,302,583 | 11,300,000 | 2,000 ,000 | 32,900,000 | 15,000,000 | 28,500,000 | 10,000,000 | 10,000,000 | 6,500,000 | 3,500,000 | - | 27,170,820 | - | - | - | 5,917,604 | |
| **ລາຍຮັບລວມຈ່າຍໃຫ້ລັດຖະບານລາວ** | **2,512,653** | **3,240,886** | **18,227,599** | **74,947 ,388** | **127,087,106** | **119,494,032** | **84,306,272** | **159,258,764** | **206,320,297** | **95,267,248** | **144,215,431** | **17,264,839** | **72,920,867** | **26,122,971** | **24,014,191** | **54,559,646** | **35,934,214** | **32,502,035** | **47,227,169** | **54,559,747** | **64,341,167** |
| ລວມທັງໝົດ | | | | | | | | | | | | | | | | | | | | | **1,664,624,490** |

ຕົວເລກທັງໝົດເປັນ US$

CHIFENG GOLD | SEPON




**ຫ້ອງການ LXML ນະຄອນຫຼວງວຽງຈັນ**

ຖະໜົນບູຣິຈັນ, ບ້ານໂພນສິນວນ, ເມືອງ
ສີສັດຕະນາກ, ຕູ້ ປນ. 4486
ນະຄອນຫຼວງວຽງຈັນ, ສປປ ລາວ

**T:** +856 21 268 200
**F:** +856 21 268 201

**ຫ້ອງການ LXML ສະຫວັນນະເຂດ**

ຖະໜົນສັນຕິພາບ, ບ້ານນາເລົາ, ນະຄອນ
ໄກສອນພົມວິການ, ຕູ້ ປນ.13
ແຂວງ ສະຫວັນນະເຂດ, ສປປ ລາວ

**T:** +856 41 212 686
**F:** +856 41 213 616

**ຫ້ອງການ LXML ພາກສະໜາມເຊໂປນ**

ເມືອງ ວິລະບູລີ, ແຂວງ ສະຫວັນນະເຂດ,
ສປປ ລາວ

**E:** lxml.information@lxml.la
**W:** www.lxml.la

**ຕິດຕໍ່ພວກເຮົາ:**
**T**: +856 21 268 226
**E**: lxml.infomation@lxml.la
**W**: www.lxml.la